ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

13- 20 ເມສາ 2023
ປີທີ 12
ສະບັບທີ 918
ລາຍສັປປະດາ

## ປະທານສະພາແຫ່ງຊາດລາວ ຕ້ອນຮັບການເຂົ້າພົບປະຂອງປະທານປະເທດ ແຫ່ງ ສສ.ຫວຽດນາມ

(ສພຊ) ວັນທີ 10 ເມສາ 2023 ທີ່ຫໍສະພາແຫ່ງຊາດລາວ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ຕ້ອນຮັບ ແລະ ພົບປະ ກັບ ສະຫາຍ ຫວໍ ວັນ ເຖືອງ ປະທານປະເທດ ແຫ່ງ ສສ.ຫວຽດນາມ ໃນໂອກາດທີ່ນຳພາຄະນະຜູ້ແທນຂັ້ນສູງຂອງ ສສ.ຫວຽດນາມ ມາຢ້ຽມຢາມ ສປປລາວ ຢ່າງເປັນທາງການ ແຕ່ວັນທີ 10-11 ເມສາ 2023.



ໃນການພົບປະຄັ້ງນີ້, ສະຫາຍ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ສະຫາຍ ຫວໍ ວັນ ເຖືອງ ທີ່ໄດ້ນຳພາຄະນະຜູ້ແທນຂັ້ນສູງຫວຽດນາມ ມາຢ້ຽມຢາມ ສປປລາວ ໃນຄັ້ງນີ້ ເຊິ່ງເປັນປະເທດທຳອິດຂອງການເຄື່ອນໄຫວຕ່າງປະເທດ ພາຍຫຼັງທີ່ສະຫາຍ ຫວໍ ວັນ ເຖືອງ ໄດ້ຮັບການເລືອກຕັ້ງໃຫ້ດຳລົງຕຳແໜ່ງເປັນປະທານປະເທດແຫ່ງ ສສ.ຫວຽດນາມ ຄົນໃໝ່ ໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ XV ເຊິ່ງເປັນການນຳເອົາໄມຕີຈິດມິດຕະພາບອັນດູດດື່ມ ຄວາມສາມັກຄີພິເສດ, ຄວາມຮັກແພງທີ່ສະໜິດສະໜົມຖານສະຫາຍອ້າຍນ້ອງຂອງພັກ, ລັດ ແລະ ປະຊາຊົນມາສູ່ພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ. ພ້ອມນັ້ນ, ກໍໄດ້ຖືໂອກາດນີ້ຝາກຄວາມຢື້ຢາມຖາມຂ່າວອັນອົບອຸ່ນ ແລະ ອວຍພອນໄຊອັນປະເສີດເຖິງສະຫາຍເລຂາທິການໃຫຍ່ ຫງວຽນ ຝູ ຈ້ອງ, ສະຫາຍນາຍົກລັດຖະມົນຕີ ຟ້າມ ມິງ ຈິງ ແລະ ສະຫາຍ ເວືອງ ດິງ ເຫວະ ປະທານສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ.

ໃນການພົບປະ, ສອງຝ່າຍ ໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ ທີ່ໄດ້ສະແດງອອກການຮ່ວມມືດ້ານການເມືອງທີ່ນັບມື້ໜັກແໜ້ນເລິກເຊິ່ງ, ການຮ່ວມມືດ້ານເສດຖະກິດ-ການຄ້າ ແລະ

ອ່ານຕໍ່ໜ້າ 3

## ທາບທາມຄຳເຫັນໃສ່ຮ່າງກົດໝາຍວ່າດ້ວຍເຢົາວະຊົນລາວ



(ສພຊ) ວັນທີ 7 ເມສາ 2023 ທີ່ຫໍສະພາແຫ່ງຊາດ ກຳມາທິການກົດໝາຍ ໄດ້ຈັດກອງປະຊຸມທາບທາມຄຳເຫັນໃສ່ຮ່າງກົດໝາຍວ່າດ້ວຍເຢົາວະຊົນລາວ ທີ່ຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ ທັງເປັນປະທານກຳມາທິການກົດໝາຍ; ມີບັນດາທ່ານປະທານ-ຮອງປະທານກຳມາທິການ ສະພາແຫ່ງຊາດ, ປະທານ-ຮອງປະທານຄະນະສະມາຊິກສະພາແຫ່ງຊາດ ແລະ

ອ່ານໜ້າ 3




## ຮຽບຮຽງເນື້ອໃນປຶ້ມຄູ່ມື ແລະ ບົດຄົ້ນຄວ້າ ຂອງກຳມາທິການແຜນການ ການເງິນ ແລະ ການກວດສອບ



(ສພຊ) ໃນລະຫວ່າງວັນທີ 5-7 ມີນາຜ່ານມາ, ຢູ່ເມືອງແກ້ວອຸດົມ ແຂວງວຽງຈັນ ໄດ້ມີກອງປະຊຸມກວດກາຮຽບຮຽງເນື້ອໃນປຶ້ມຄູ່ມື ແລະ ບົດຄົ້ນຄວ້າຂອງກຳມາທິການແຜນການ ການເງິນ ແລະ ການກວດສອບ ສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ປອ. ລີເບີ ລີບົວປາວ ກຳມະການສູນກາງພັກ, ປະທານກຳມາທິການແຜນການ ການເງິນ ແລະ ການກວດສອບ ສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານຮອງປະທານກຳມາທິການ, ຄະນະກົມ, ຄະນະພະແນກ ແລະ ວິຊາການພາຍໃນ

ອ່ານຕໍ່ໜ້າ 2

## ຄະນະຜູ້ແທນກຳມາທິການຍຸຕິທຳ ສະພາແຫ່ງຊາດລາວ ສຳເລັດການຢ້ຽມຢາມ ສສ.ຫວຽດນາມ



ອ່ານໜ້າ 3



**ແລກປ່ຽນບົດຮຽນ...**

ອ່ານຕໍ່ໜ້າ 5



**ຜົນສຳເລັດອັນພົ້ນເດັ່ນ...**

ອ່ານຕໍ່ໜ້າ 6



**ຄລສ ເຊກອງ...**

ອ່ານຕໍ່ໜ້າ 7

**ປີເກົ່າຜ່ານໄປ ປີໃໝ່ວຽນມາ ຂໍອວຍພອນໄຊອັນປະເສີດແກ່ບັນດາທ່ານການນຳພັກ-ລັດ ມີສຸຂະພາບເຂັ້ມແຂງມີພະລານາໄມສົມບູນ**

# ປະກອບຄຳເຫັນໃສ່ຮ່າງຄູ່ມືການໂຄສະນາ ເຜີຍແຜ່ລັດຖະທຳມະນູນ ແລະ ກົດໝາຍຂົງເຂດສະພາແຫ່ງຊາດ



(ສພຊ) ເພື່ອເປັນການປະກອບຄຳເຫັນໃສ່ຮ່າງຄູ່ມືການໂຄສະນາເຜີຍແຜ່ລັດຖະທຳມະນູນທີ່ໄດ້ຮ່າງໃນເບື້ອງຕົ້ນໃຫ້ມີເນື້ອໃນຄົບຖ້ວນ ແລະ ສາມາດນຳໄປໂຄສະນາເຜີຍແຜ່ໃຫ້ແກ່ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນລາວບັນດາເຜົ່າ ແລະ ເພື່ອເປັນການທາບທາມຄຳຄິດຄຳເຫັນຕໍ່ຮ່າງຄູ່ມືການໂຄສະນາເຜີຍແຜ່ກົດໝາຍຂົງເຂດສະພາແຫ່ງຊາດ ໃນວັນທີ 6 ເມສາຜ່ານມາ, ທີ່ສະພາແຫ່ງຊາດ ກຳມາທິການກົດໝາຍໄດ້ຈັດກອງປະຊຸມປະກອບຄຳເຫັນໃສ່ຮ່າງຄູ່ມື ການໂຄສະນາເຜີຍແຜ່ລັດຖະທຳມະນູນ ແລະ ປຶກສາຫາລືໂຄງຮ່າງຄູ່ມືການໂຄສະນາເຜີຍແຜ່ກົດໝາຍຂົງເຂດສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ອຳໄພ ຈິດມານົບ ຮອງປະທານກຳມາທິການກົດໝາຍ ມີບັນດາທ່ານຫົວໜ້າ-ຮອງຫົວໜ້າກົມ, ຫົວໜ້າ-ຮອງຫົວໜ້າພະແນກຈາກກົມ, ສູນ, ພາຍໃນສະພາແຫ່ງຊາດເຂົ້າຮ່ວມ.

ໃນວາລະການດຳເນີນກອງປະຊຸມ, ບັນດາຜູ້ແທນກອງປະຊຸມໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນໃສ່ຮ່າງຄູ່ມືການໂຄສະນາ ເຜີຍແຜ່ລັດຖະທຳມະນູນຂອງ ສປປລາວ ແລະ ໂຄງຮ່າງຄູ່ມືການໂຄສະນາເຜີຍແຜ່ກົດໝາຍຂົງເຂດສະພາແຫ່ງຊາດ ໃຫ້ແກ່ພະນັກງານ-ລັດຖະກອນ ແລະ ໃຫ້ແກ່ປະຊາຊົນລາວບັນດາເຜົ່າ.

(ສອນສັກ ວັນວິໄຊ)

# ຄະນະຜູ້ແທນສະພາແຫ່ງຊາດ ສຳເລັດການເຂົ້າຮ່ວມກອງປະຊຸມ ທີ່ລາຊະອານາຈັກກຳປູເຈຍ



(ສພຊ) ໃນລະຫວ່າງວັນທີ 5-7 ເມສາ 2023, ທ່ານ ອຸດົມ ວົງໄກສອນ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມສຳມະນາພາຍໃຕ້ຫົວຂໍ້: "ການເຈລະຈາ ແລະ ການໄກ່ເກ່ຍ ຂອງສະມາຊິກລັດຖະສະພາ: ເຕັກນິກ, ທັກສະ ແລະ ປະສົບການ" ເຊິ່ງຈັດຂຶ້ນທີ່ຊຽມລຽບ ລາຊະອານາຈັກກຳປູເຈຍ ໂດຍຈັດຂຶ້ນພາຍໃຕ້ການຮ່ວມມືຂອງສູນລັດຖະສະພາອາຊີ (PCAsia) ແລະ ກອງເລຂາສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA) ມີສະມາຊິກສະພາແຫ່ງຊາດ ແລະ ວິຊາການຈາກບັນດາລັດຖະສະພາສະມາຊິກ AIPA ພ້ອມດ້ວຍກອງເລຂາໄອປາ ແລະ ຊ່ຽວຊານຈາກລັດຖະສະພາເອີຣົບ ເຂົ້າຮ່ວມລວມທັງໝົດ 36 ທ່ານ.

ກອງປະຊຸມຄັ້ງນີ້, ໄດ້ຮັບຟັງການນຳສະເໜີກ່ຽວກັບຄວາມຮູ້ພື້ນຖານ ແລະ ບົດຮຽນກ່ຽວກັບການເຈລະຈາ, ການໄກ່ເກ່ຍ ແລະ ການປານີປານອມ ໂດຍສະເພາະແມ່ນການເຈລະຈາລະຫວ່າງອົງການນິຕິບັດຍັດ ແລະ ອົງການບໍລິຫານ ໃນການຮັບຮອງເອົາແຜນງົບປະມານແຫ່ງຊາດ, ການເຈລະຈາໃນທີ່ປະຊຸມ ແລະ ການຈັດຕັ້ງປະຕິບັດວຽກງານການທູດລັດຖະສະພາ ເຊິ່ງຜູ້ເຂົ້າຮ່ວມໄດ້ແລກປ່ຽນບົດຮຽນ ແລະ ປະສົບການ ເຊິ່ງກັນແລະກັນ ຢ່າງຟົດຟື້ນ ແລະ ສ້າງສັນ.

## ຮຽບຮຽງ...

(ຕໍ່ຈາກໜ້າ 1)

ກຳມາທິການດັ່ງກ່າວ ພ້ອມດ້ວຍນັກຄົ້ນຄວ້າຜູ້ຊ່ຽວຊານ ແລະ ຄະນະກວດແກ້ ຈາກສະຖາບັນຄົ້ນຄວ້າເສດຖະກິດ-ສັງຄົມແຫ່ງຊາດ, ສະຖາບັນການເງິນຈຸລະພາກ ແລະ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ.

ທັງນີ້, ແມ່ນເພື່ອຈັດຕັ້ງປະຕິບັດຕາມແຜນການສ້າງຄວາມເຂັ້ມແຂງຂອງກຳມາທິການແຜນການ ການເງິນ ແລະ ການກວດສອບ ສະພາແຫ່ງຊາດ ໃນການສ້າງປຶ້ມຄູ່ມື ແລະ ສະໜອງຜົນການຄົ້ນຄວ້າທີ່ກ່ຽວຂ້ອງ ໃຫ້ກຳມະການຂອງກຳມາທິການ ແລະ ວິຊາການຂອງກຳມາທິການ; ເພື່ອກວດກາຜ່ານເນື້ອໃນຮອບດ້ານຂອງປຶ້ມຄູ່ມື ແລະ ບົດຄົ້ນຄວ້າໃຫ້ສຳເລັດກ່ອນນຳໄປຜ່ານກອງປະຊຸມເປີດກວ້າງທາບທາມຄຳເຫັນຈາກຫຼາຍພາກສ່ວນ ທີ່ຈະຈັດຂຶ້ນໃນທ້າຍເດືອນເມສາ 2023 ທັງເພື່ອຈັດຕັ້ງປະຕິບັດການຄົ້ນຄວ້າ ແລະ ຂຽນປຶ້ມຄູ່ມືຕົວຈິງໃຫ້ສຳເລັດຕາມກອບກຳນົດໄລຍະເວລາຂອງໂຄງການທີ່ໃຫ້ການສະໜັບສະໜູນດ້ານງົບປະມານຕາມແຜນທີ່ກຳນົດໄວ້.

ກອງປະຊຸມຄັ້ງນີ້, ຜູ້ເຂົ້າຮ່ວມໄດ້ສຸມໃສ່ຄົ້ນຄວ້າປຶກສາຫາລື ແລະ ພິຈາລະນາຢ່າງລະອຽດ ແລະ ກົງໄປກົງມາກ່ຽວກັບປຶ້ມຄູ່ມືກົນໄກ ແລະ ຫຼັກການພິຈາລະນາຮັບຮອງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ, ແຜນເງິນຕາ ການຮ່າງບົດປະກອບຄຳເຫັນ, ການສ້າງຮ່າງມະຕິ, ຄຳຖາມເຈາະຈົ້ມ, ຄຳຊັກຖາມ ແລະ ບົດແນະນຳ ໃນຂົງເຂດແຜນການ, ງົບປະມານ, ການເງິນ, ການກວດສອບ ແລະ ກວດກາລັດ; ປຶ້ມຄູ່ມືກົນໄກ ແລະ ຫຼັກການ ການຕິດຕາມກວດກາ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ; ປຶ້ມຄູ່ມືອະທິບາຍຄວາມໝາຍຕົວຊີ້ວັດມະຕິແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ມະຕິແຜນງົບປະມານແຫ່ງລັດ; ປຶ້ມຄວາມຮູ້ພື້ນຖານກ່ຽວກັບເສດຖະສາດ, ແຜນພັດທະນາເສດຖະກິດ ແລະ ການຄຸ້ມຄອງການລົງທຶນ ເພື່ອການພິຈາລະນາ ແລະ ການຮັບຮອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ; ປຶ້ມຄວາມຮູ້ພື້ນຖານແຜນງົບປະມານແຫ່ງລັດ, ການດຸນດ່ຽງ ແລະ ແຜນການຊຳລະໜີ້ສິນ ເພື່ອການພິຈາລະນາ ແລະ ການຮັບຮອງແຜນງົບປະມານແຫ່ງລັດ; ປຶ້ມຄວາມຮູ້ພື້ນຖານເງິນຕາ, ທະນາຄານ ແລະ ລະບົບການເງິນ ເພື່ອການພິຈາລະນາ ແລະ ການຮັບຮອງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນເງິນຕາ; ປຶ້ມຄວາມຮູ້ພື້ນຖານສະຖິຕິ ແລະ ຫຼັກການວິເຄາະທາງປະລິມານ ສຳລັບການພິຈາລະນາ ແລະ ການຮັບຮອງແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ; ບົດຄົ້ນຄວ້າປະສິດທິພາບການລົງທຶນເພື່ອການພັດທະນາເສດຖະກິດ-ສັງຄົມທາງດ້ານມະຫາພາກ; ບົດຄົ້ນຄວ້າປະເມີນຜົນການປະຕິບັດນະໂຍບາຍການເງິນ-ງົບປະມານຕໍ່ແຜນງົບປະມານແຫ່ງລັດ ແລະ ບົດຄົ້ນຄວ້າ ການປະເມີນຜົນນະໂຍບາຍເງິນຕາຕໍ່ການຮັກສາສະຖຽນລະພາບດ້ານເສດຖະກິດ-ສັງຄົມ ເຮັດໃຫ້ປຶ້ມຄູ່ມື ແລະ ບົດຄົ້ນຄວ້າຕ່າງໆເຫຼົ່ານີ້ ມີຄວາມຖືກຕ້ອງ, ສອດຄ່ອງ, ເໝາະສົມ ແລະ ນຳໃຊ້ເຂົ້າໃນການປະຕິບັດວຽກງານຕົວຈິງໄດ້.

(ນາງ ປາກາລັກ ພົມມີໄຊ)

## ເລື່ອງເດັ່ນ ຂ່າວເດັດ

# ຄັດໂດຍ: ທອມສະນິດ

*❐ ບົດລາຍງານຄາດຄະເນການພັດທະນາຂອງອາຊີ ສະບັບເດືອນເມສາ ປີ 2023 ຄາດຄະເນວ່າ: ການເຕີບໂຕຂອງລວມຍອດຜະລິດຕະພັນພາຍໃນປະເທດ (GDP) ຂອງ ສປປລາວ ຢູ່ໃນລະດັບ 4% ສຳລັບປີນີ້ ແລະ ປີໜ້າ; ສ່ວນການລົງທຶນໃໝ່ໃນຂະແໜງພະລັງງານທົດແທນລວມທັງໂຄງການພະລັງລົມທີ່ມີຂະໜາດ 600 ເມກາວັດ ທີ່ໄດ້ຮັບການສະໜອງທຶນໃນວົງເງິນ 692,55 ລ້ານໂດລາ ແລະ ການເປີດຊາຍແດນຄືນໃໝ່ ຈະເປັນແຮງຍູ້ໃຫ້ແກ່ການຟື້ນຕົວດ້ານເສດຖະກິດ.*

***ໜສພ. ປະຊາຊົນ 07/04/2023***

*❐ ນະຄອນຫຼວງໄດ້ອອກຄຳສັ່ງວ່າດ້ວຍການຮັກສາຄວາມສະຫງົບ ຄວາມເປັນລະບຽບຮຽບຮ້ອຍໃນໄລຍະການສະເຫຼີມສະຫຼອງບຸນປີໃໝ່ລາວ ພສ. 2566 ຢູ່ນະຄອນຫຼວງວຽງຈັນ ເຊິ່ງຄຳສັ່ງດັ່ງກ່າວໄດ້ລະບຸວ່າ: ການສະຫຼອງບຸນປີໃໝ່ລາວ ພສ. 2566 ແມ່ນໃຫ້ດຳເນີນໄປດ້ວຍບັນຍາກາດຟົດຟື້ນມ່ວນຊື່ນ, ຖືກຕ້ອງຕາມຮີດຄອງປະເພນີ ແລະ ຂະນົບທຳນຽມອັນດີງາມຂອງລາວໃນວັດວາອາຮາມ ຫຼື ສະຖານທີ່ສັກກະລະບູຊາຕ່າງໆ ແລະ ຢູ່ພາຍໃນຄອບຄົວດ້ວຍຈິດໃຈທີ່ປະຢັດມັດທະຍັດຕາມນະໂຍບາຍຂອງພັກ-ລັດຖະບານ ເຊິ່ງເລີ່ມແຕ່ວັນທີ 14, 15 ແລະ 16 ເມສາ 2023 ແລະ ໃຫ້ຢຸດເຊົາການຫຼິ້ນບຸນໃນແຕ່ລະວັນບໍ່ໃຫ້ກາຍເວລາ 23:00 ໂມງ ແລະ ໃຫ້ຖືເອົາວັນທີ 17-18 ເມສາ 2023 ເປັນວັນພັກຊົດເຊີຍ; ໃຫ້ຈັດຕັ້ງການປະຈຳການປ້ອງກັນເວນຍາມ, ກວດກາລາດຕະເວນ ແລະ ເຝົ້າລະວັງ ຢູ່ຕາມເຮືອນຊານບ້ານຊ່ອງ, ສຳນັກງານ, ຫ້ອງການຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນໃນສັງຄົມ ເພື່ອປ້ອງກັນ, ສະກັດກັ້ນເຫດຮ້າຍ ຫຼື ອຸບັດຕິໄພຕ່າງໆທີ່ອາດຈະເກີດຂຶ້ນ ທັງຮັບປະກັນໃຫ້ມີການປະສານງານກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງໃຫ້ມີຄວາມສະດວກ, ວ່ອງໄວ ແລະ ແກ້ໄຂບັນຫາໄດ້ຢ່າງທັນການ.*

***ໜສພ. ປະເທດລາວ 07/04/2023***

*❐ 1 ປີຜ່ານມາ, ຂະແໜງອຸດສາຫະກຳ ແລະ ການຄ້າ ສາມາດຈັດຕັ້ງປະຕິບັດວຽກງານດັ່ງກ່າວໃນຫຼາຍດ້ານ ໂດຍສະເພາະການຈັດຕັ້ງປະຕິບັດວຽກງານດ້ານການຜະລິດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ສາມາດບັນລຸໄດ້ 13.210 ຕື້ກີບເທົ່າກັບ 101,56% ຂອງແຜນການ ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 11,21% ມູນຄ່າການບໍລິການຈໍລະຈອນສິນຄ້າ (ຂາຍຍົກ-ຂາຍຍ່ອຍ ແລະ ຄ່າບໍລິການສ້ອມແປງ) ສາມາດບັນລຸໄດ້ 72.622 ຕື້ກີບ ເທົ່າກັບ107% ຂອງແຜນການປີ ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 18,87% ມູນຄ່ານຳເຂົ້າ-ສົ່ງອອກບັນລຸໄດ້ 15.006 ລ້ານໂດລາສະຫະລັດ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 11% ແລະ ສາມາດບັນລຸໄດ້ 110% ຂອງແຜນການປີ2022 ໃນນີ້ມູນຄ່າສົ່ງອອກປະຕິບັດໄດ້ 8.198 ລ້ານໂດລາ ເພີ່ມຂຶ້ນ 7,5% ແລະ ບັນລຸໄດ້ 107,87% ຂອງແຜນການປີມູນຄ່ານຳເຂົ້າ ປະຕິບັດໄດ້ 6.808 ລ້ານໂດລາ ເພີ່ມຂຶ້ນ 15,6% ເທົ່າກັບ 112,53% ຂອງແຜນການປີ ຈາກຕົວເລກດັ່ງກ່າວເຫັນວ່າ ມູນຄ່າການຄ້າແມ່ນເກີນດຸນ 1.390 ລ້ານໂດລາ ຖ້າບໍ່ລວມຕົວເລກນຳເຂົ້າ ແລະ ສົ່ງອອກ ຂະແໜງໄຟຟ້າແມ່ນຍັງຂາດດຸນການຄ້າຢູ່ປະມານ 928 ລ້ານໂດລາສະຫະລັດ.*

***ໜສພ. ວຽງຈັນໃໝ່ 10/04/2023***



## ປະທານ...

(ຕໍ່ຈາກໜ້າ 1)

ດ້ານອື່ນໆ ໄດ້ຮັບການເສີມຂະຫຍາຍ ແລະ ມີຄວາມຄືບໜ້າ, ພິເສດ ໃນປີ 2022 ຜ່ານມາ ສອງປະເທດ ໄດ້ສຳເລັດການສະເຫຼີມສະຫຼອງປີສາມັກຄີມິດຕະພາບລາວ-ຫວຽດນາມ, ຫວຽດນາມ-ລາວ ຢ່າງເປັນຂະບວນການຟົດຟື້ນ ແລະ ມີຄວາມໝາຍເລິກເຊິ່ງ ທັງເປັນໂອກາດອັນດີໃນການສຶກສາອົບຮົມປະຊາຊົນສອງຊາດ ໂດຍສະເພາະຄົນຮຸ່ນໜຸ່ມຂອງສອງປະເທດ ໃຫ້ມີຄວາມເຂົ້າໃຈ ແລະ ມີຄວາມຮັບຜິດຊອບຕໍ່ການເສີມຂະຫຍາຍສາຍພົວພັນທີ່ຫາຍາກນີ້ ໃຫ້ນັບມື້ມີປະສິດທິຜົນ. ພ້ອມນີ້, ກໍໄດ້ເຫັນດີເປັນເອກະພາບກັນຈະສືບຕໍ່ເສີມຂະຫຍາຍສາຍພົວພັນພິເສດນີ້ ໃຫ້ນັບມື້ຈະເລີນງອກງາມ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ, ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດລາວ-ຫວຽດນາມ, ພ້ອມທັງໄດ້ເປັນເອກະພາບຈະສືບຕໍ່ໃຫ້ການສະໜັບສະໜູນຊ່ວຍເຫຼືອເຊິ່ງກັນແລະກັນ ໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ ໃນເວທີພາກພື້ນ ແລະ ສາກົນ.

ໂອກາດນີ້, ສະຫາຍ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນສຳເລັດອັນໃຫຍ່ຫຼວງຮອບດ້ານທີ່ປະຊາຊົນຫວຽດນາມອ້າຍນ້ອງຍາດມາໄດ້ ພາຍໃຕ້ການຊີ້ນຳ-ນຳພາອັນສະຫຼາດສ່ອງໃສຂອງພັກກອມມູນິດຫວຽດນາມ ໃນການສ້າງສາ ແລະ ພັດທະນາປະເທດຊາດຕາມມະຕິກອງປະຊຸມໃຫຍ່ ຄັ້ງທີ XIII ຂອງພັກກອມມູນິດຫວຽດນາມ, ອັນໄດ້ເຮັດໃຫ້ສະຖຽນລະພາບທາງການເມືອງມີຄວາມໜັກແໜ້ນ, ສັງຄົມມີຄວາມສະຫງົບປອດໄພ, ສາມາດຟື້ນຟູເສດຖະກິດ ພາຍຫຼັງທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19, ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ, ປະເທດຊາດມີຄວາມເຂັ້ມແຂງ, ມີປະຊາທິປະໄຕ, ມີຄວາມຍຸຕິທຳ ແລະ ສີວິໄລ. ໃນໂອກາດດຽວກັນ, ກໍໄດ້ແຈ້ງໃຫ້ຊາບກ່ຽວກັບການພົວພັນຮ່ວມມື ລະຫວ່າງສອງສະພາແຫ່ງຊາດ ລາວ-ຫວຽດນາມ ໃນໄລຍະຜ່ານມາ ແລະ ທິດທາງແຜນການຮ່ວມມືກັນໃນອະນາຄົດ, ເຊິ່ງເຫັນວ່າການພົວພັນລະຫວ່າງ ສອງສະພາແຫ່ງຊາດ ລາວ-ຫວຽດນາມ ແມ່ນໄດ້ຮັບການເສີມຂະຫຍາຍຂຶ້ນຢ່າງຕໍ່ເນື່ອງ ນຳຜົນປະໂຫຍດຕົວຈິງມາສູ່ສອງອົງການນິຕິບັນຍັດ, ສອງສະພາແຫ່ງຊາດ ລາວ ແລະ ຫວຽດນາມ ຍິນດີສືບຕໍ່ໃຫ້ການຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ໃນຕໍ່ໜ້າ; ພ້ອມດຽວກັນນັ້ນ, ສະຫາຍປະທານສະພາແຫ່ງຊາດລາວ ຍັງໄດ້ສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນຢ່າງສູງຕໍ່ການຊ່ວຍເຫຼືອອັນລ້ຳຄ່າຂອງ ພັກ-ລັດ ແລະ ປະຊາຊົນຫວຽດນາມ ອ້າຍນ້ອງ ທີ່ໄດ້ມອບໃຫ້ ພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ; ພິເສດແມ່ນຂອງຂວັນອັນລ້ຳຄ່າ ກໍຄືຫໍສະພາແຫ່ງຊາດຫຼັງໃໝ່ນີ້ ເຊິ່ງເປັນສັນຍະລັກແຫ່ງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານຂອງສອງຊາດ ລາວ-ຫວຽດນາມ.

ໃນການພົບປະຄັ້ງນີ້, ສະຫາຍ ຫວໍ ວັນ ເທືອງ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນຂອງການນຳພັກ-ລັດ ສປປລາວ ພ້ອມທັງໄດ້ສະແດງຄວາມຊົມເຊີຍຕໍ່ບັນດາຜົນສຳເລັດຮອບດ້ານໃນການພັດທະນາຂອງ ສປປ ລາວ ໃນໄລຍະມໍ່ໆມານີ້ ແລະ ເຊື່ອໝັ້ນວ່າໂດຍພາຍໃຕ້ການນຳພາອັນສະຫຼາດສ່ອງໃສຂອງພັກປະຊາຊົນ ປະຕິວັດລາວ, ປະຊາຊົນລາວ ອ້າຍນ້ອງ ຈະສາມາດບັນລຸຜົນສຳເລັດໃໝ່ໃຫຍ່ຫຼວງກວ່າເກົ່າ ໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ, ປະຕິບັດບັນດາມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໃຫ້ປາກົດຜົນເປັນຈິງ ແລະ ຈະສືບຕໍ່ຊຸກຍູ້ການພົວພັນດ້ານຕ່າງໆກັບ ສປປລາວ ໃຫ້ນັບມື້ນັບມີປະສິດທິຜົນ.

## ທາບທາມ...

(ຕໍ່ຈາກໜ້າ 1)

ສະພາປະຊາຊົນຂັ້ນແຂວງ, ຮອງເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມ.

ໃນໂອກາດນີ້, ທ່ານ ສຈ. ປອ.ຈະເລີນ ເຢຍປາວເຮີ ໄດ້ມີຄຳເຫັນກ່າວເປີດກອງປະຊຸມວ່າ: ຮ່າງກົດໝາຍວ່າດ້ວຍເຍົາວະຊົນລາວ ເປັນຮ່າງກົດໝາຍສ້າງໃໝ່ທີ່ມີຄວາມສຳຄັນຫຼາຍ ຍ້ອນວ່າເຍົາວະຊົນລາວ ເປັນກຳລັງສືບທອດຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ, ເປັນກຳລັງສືບທອດຂອງຊາດ, ຂອງພັກ ແລະ ຂອງການປະຕິວັດປະເທດເຮົາ; ຮ່າງກົດໝາຍສະບັບນີ້ຈະເປັນເອກະສານນິຕິກຳພື້ນຖານສຳລັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເຍົາວະຊົນລາວ ແລະ ຮ່າງກົດໝາຍສະບັບດັ່ງກ່າວນີ້ ແມ່ນມີການພົວພັນກັບບັນດາກົດໝາຍ ທີ່ໄດ້ປະກາດໃຊ້ແລ້ວ; ພ້ອມນັ້ນ, ທ່ານຍັງໄດ້ສະເໜີໃຫ້ບັນດາທ່ານຜູ້ເຂົ້າຮ່ວມກອງປະຊຸມ ຈົ່ງພ້ອມກັນເປັນເຈົ້າການຄົ້ນຄວ້າ ແລະ ປະກອບຄຳຄິດຄຳເຫັນໃສ່ເນື້ອໃນຮ່າງກົດໝາຍສະບັບດັ່ງກ່າວ ໃຫ້ເລິກເຊິ່ງ ເຮັດໃຫ້ຮ່າງກົດໝາຍມີຄວາມຄົບຖ້ວນ, ຮັດກຸມ, ຈະແຈ້ງ ແລະ ເຂົ້າໃຈງ່າຍ ກ່ອນນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະໄຂຂຶ້ນໃນຕົ້ນເດືອນມິຖຸນາ 2023.

(ສອນສັກ ວັນວິໄຊ)



## ຄະນະ...

(ຕໍ່ຈາກໜ້າ 1)

(ສພຊ) ໃນລະຫວ່າງວັນທີ 26-30 ມີນາຜ່ານມານີ້, ຄະນະຜູ້ແທນກຳມາທິການຍຸຕິທຳ ສະພາແຫ່ງຊາດ ແຫ່ງ ສປປລາວ ພ້ອມດ້ວຍຄະນະ ໄດ້ເດີນທາງຢ້ຽມຢາມ ແລະ ເຮັດວຽກທາງການ ຢູ່ ສສ. ຫວຽດນາມ ນຳໂດຍສະຫາຍ ຄຳແພງ ວິລະພັນ ກຳມະການຄະນະປະຈຳ, ປະທານກຳມາທິການຍຸຕິທຳ ສະພາແຫ່ງຊາດ.

ໃນການຢ້ຽມຢາມຄັ້ງນີ້, ຄະນະ ໄດ້ພົບປະສອງຝ່າຍກັບ ສະຫາຍ ນາງ ເລ ທິ ງ່າ ກຳມະການສູນກາງພັກກອມມູນິດຫວຽດນາມ, ປະທານກຳມາທິການຍຸຕິທຳ ສະພາແຫ່ງຊາດ ສສ.ຫວຽດນາມ ພ້ອມດ້ວຍຄະນະ, ພົບປະເຮັດວຽກກັບ ສະຫາຍ ເຢື່ອງ ທັນ ບິງ ກຳມະການສູນກາງພັກກອມມູນິດຫວຽດນາມ, ຫົວໜ້າຄະນະກຳມະການແກ້ໄຂຄຳຮ້ອງທຸກ ຂອງຄະນະປະຈຳ ສະພາແຫ່ງຊາດ ສສ.ຫວຽດນາມ, ໄດ້ເຂົ້າຢ້ຽມຂ່ຳນັບສະຫາຍ ຫງວຽນ ຄັກ ດິ້ງ ກຳມະການສູນກາງພັກກອມມູນິດຫວຽດນາມ, ຮອງປະທານສະພາແຫ່ງຊາດ ສສ.ຫວຽດນາມ ທີ່ຫໍສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ. ພ້ອມດຽວກັນນີ້, ຄະນະຜູ້ແທນ ຍັງໄດ້ເຄື່ອນໄຫວເຮັດວຽກຢູ່ທ້ອງຖິ່ນ ເປັນຕົ້ນແມ່ນເຮັດວຽກກັບສານປະຊາຊົນຂອງນະຄອນຫຼວງຮ່າໂນ້ຍ, ເຂົ້າຢ້ຽມຂ່ຳນັບສະຫາຍ ຫງວຽນ ວັນ ເຮັງ ກຳມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ, ເລຂາພັກນະຄອນໂຮ່ຈິມິນ, ຫົວໜ້າຄະນະປະຕິຮູບກົດໝາຍນະຄອນໂຮ່ຈິມິນ ແລະ ເຮັດວຽກກັບສະພາປະຊາຊົນນະຄອນ ໂຮ່ຈິມິນ.

ການມາຢ້ຽມຢາມ ແລະ ເຮັດວຽກຄັ້ງນີ້ ແມ່ນເປັນການຈັດຕັ້ງຜັນຂະຫຍາຍບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມື ລະຫວ່າງ ສະພາແຫ່ງຊາດລາວ ແລະ ຫວຽດນາມ ສະບັບປີ 2022 ແລະ ຜົນຂອງການຢ້ຽມຢາມທີ່ ສສ.ຫວຽດນາມ ຂອງສອງສະຫາຍປະທານສະພາແຫ່ງຊາດ ລາວ ແລະ ຫວຽດນາມ ໃນໄລຍະຜ່ານມາ ທັງເປັນການປະກອບສ່ວນສຳຄັນເຂົ້າໃນການສືບຕໍ່ຮັດແໜ້ນ ການພົວພັນຮ່ວມມື ຊ່ວຍເຫຼືອເຊິ່ງກັນແລະກັນ ລະຫວ່າງ ສອງອົງການນິຕິບັນຍັດ ລາວ-ຫວຽດນາມ ເວົ້າລວມ, ເວົ້າສະເພາະ ລະຫວ່າງກຳມາທິການຍຸຕິທຳ ສປປລາວ ກັບ ກຳມາທິການຍຸຕິທຳ ສສ.ຫວຽດນາມ ໃຫ້ນັບມື້ເຂົ້າສູ່ລວງເລິກ ແລະ ມີຄຸນນະພາບໃໝ່.

ຕະຫຼອດໄລຍະຜ່ານມາ ສອງກຳມາທິການຍຸຕິທຳ ສະພາແຫ່ງຊາດລາວ-ຫວຽດນາມ ໄດ້ມີການພົວພັນຮ່ວມມື ໂດຍໄດ້ມີການຢ້ຽມຢາມເຮັດວຽກແລກປ່ຽນບົດຮຽນເຊິ່ງກັນແລະກັນ ທາງດ້ານວິຊາການ, ຂໍ້ມູນຂ່າວສານ ໃນການຈັດຕັ້ງປະຕິບັດພາລະບົດບາດຂອງສອງສະພາແຫ່ງຊາດ ກໍຄື ສອງກຳມາທິການຍຸຕິທຳ ສະພາແຫ່ງຊາດ ຂອງສອງປະເທດ ລາວ-ຫວຽດນາມ. ສອງກຳມາທິການ ເຫັນດີສືບຕໍ່ແລກປ່ຽນຄະນະຜູ້ແທນ ເພື່ອຢ້ຽມຢາມ, ຖອດຖອນບົດຮຽນ ແລະ ແລກປ່ຽນຂໍ້ມູນຂ່າວສານນຳກັນກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດ ດ້ານນິຕິບັນຍັດ, ການຄົ້ນຄວ້າ ແລະ ພິຈາລະນາບັນຫາສຳຄັນຂອງຊາດ, ວຽກງານຕິດຕາມກວດກາໃນຂົງເຂດຍຸຕິທຳ ແນໃສ່ຍົກສູງຄຸນນະພາບການເຄື່ອນໄຫວຂອງກຳມາທິການ ກໍຄືການເປັນເສນາທິການໃຫ້ແກ່ສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ; ຮ່ວມກັນຈັດຝຶກອົບຮົມຍົກສູງຂີດຄວາມສາມາດ ໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ພະນັກງານ-ວິຊາການ ຂອງທັງສອງກຳມາທິການ ຕາມຫົວຂໍ້ທີ່ທັງສອງຝ່າຍມີຄວາມສົນໃຈ; ທັງສອງຝ່າຍຕົກລົງເຫັນດີສ້າງບົດບັນທຶກຄວາມເຂົ້າໃຈ (MOU) ວ່າດ້ວຍການຮ່ວມມືລະຫວ່າງສອງກຳມາທິການຍຸຕິທຳ ເພື່ອເປັນບ່ອນອີງໃຫ້ແກ່ການເພີ່ມທະວີການພົວພັນຮ່ວມມື ແລະ ການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ ເຊິ່ງກັນແລະກັນ.



ໃນໂອກາດດຽວກັນ, ຄະນະຜູ້ແທນຂອງກຳມາທິການຍຸຕິທຳ ສະພາແຫ່ງຊາດ ລາວ ຍັງໄດ້ຢ້ຽມຢາມສະຖານທີ່ປະຫວັດສາດ, ສະຖານທີ່ທ່ອງທ່ຽວວັດທະນະທຳ ຢູ່ນະຄອນໂຮ່ຈິມິນ ແລະ ຢູ່ແຂວງບາເຣຍ ຫວຸ໋ງເຕົ່າ ຕື່ມອີກ.

(ກຳມາທິການຍຸຕິທຳ)

# ຜົນສຳເລັດອັນພົ້ນເດັ່ນຂອງ ສສຊ ເຂດ 12 ແລະ ສພຂ ຄຳມ່ວນ

ທ່ານ ບຸນມີ ພິມມະສອນ ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 12 ທັງເປັນປະທານສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ໃຫ້ສຳພາດຕໍ່ສື່ມວນຊົນໃນວາລະເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງທ່ານໃຫ້ຮູ້ວ່າ: ຜົນສຳເລັດອັນພົ້ນເດັ່ນນັບແຕ່ກອງປະຊຸມສະໄໝສາມັນເທື່ອທີ 3 ຫາເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ສະແດງອອກຄື:

**1. ດ້ານນິຕິບັນຍັດ ແລະ ນິຕິກຳທີ່ສຳຄັນຂອງທ້ອງຖິ່ນ**

ໄດ້ເຂົ້າຮ່ວມໃນການທາບທາມ ປະກອບຄຳຄິດເຫັນໃສ່ຮ່າງກົດໝາຍທີ່ຄະນະປະຈຳສະພາແຫ່ງຊາດ ແລະ ພາກສ່ວນກ່ຽວຂ້ອງຈັດຂຶ້ນທັງໝົດຈຳນວນ 25 ສະບັບ ໃນນັ້ນ, ເປັນກົດໝາຍສ້າງໃໝ່ 6 ສະບັບ ແລະ ກົດໝາຍປັບປຸງ 19 ສະບັບ ເຊິ່ງໄດ້ພິຈາລະນາ ແລະ ຮັບຮອງເອົາຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 3 ມີຈຳນວນ 9 ສະບັບ ໃນນີ້, ສ້າງໃໝ່ 3 ສະບັບ ແລະ ປັບປຸງ 6 ສະບັບ; ນອກຈາກນີ້, ກໍໄດ້ເຂົ້າຮ່ວມໃນການປະກອບຄຳເຫັນໃສ່ຮ່າງນິຕິກຳສຳຄັນຂອງທ້ອງຖິ່ນ ໄດ້ທັງໝົດ 13 ສະບັບ ໃນນີ້, ເປັນນິຕິກຳໃຕ້ກົດໝາຍຂອງ ສພຂ 9 ສະບັບ ແລະ ເປັນນິຕິກຳຂອງອົງການປົກຄອງແຂວງ 4 ສະບັບ; ເຂົ້າຮ່ວມໃນການປະເມີນການຈັດຕັ້ງປະຕິບັດກົດໝາຍ ຈຳນວນ 8 ສະບັບ ທີ່ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ. ພ້ອມນັ້ນ, ກໍໄດ້ສົມທົບກັບຄະນະປະຈຳ ສພຂ ໃນການອອກຄຳແນະນຳວ່າດ້ວຍການຕິດຕາມກວດກາວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ; ການເຄື່ອນໄຫວວຽກງານໃນການປະຕິບັດພາລະບົດບາດ ເປັນຕົວແທນຂອງຜູ້ມີສິດເລືອກຕັ້ງ ກໍໄດ້ເອົາໃຈໃສ່ໃນການລົງເຄື່ອນໄຫວພົບປະຜູ້ມີສິດປ່ອນບັດເລືອກຕັ້ງ ຕິດພັນກັບການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2, 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ II ໄດ້ທັງໝົດ 96 ຈຸດ, ມີຜູ້ເຂົ້າຮ່ວມຮັບຟັງທັງໝົດ 10.260 ທ່ານ ຍິງ 4.638 ທ່ານ; ນອກຈາກນີ້, ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 12 ທີ່ປະຈຳຢູ່ສູນກາງ ຍັງໄດ້ມອບວັດຖຸອຸປະກອນຮັບໃຊ້ວຽກງານວິຊາການຂອງຂະແໜງຊັບພະຍາກອນທຳມະຊາດສິ່ງແວດລ້ອມ ແລະ ອຸປະກອນຮັບໃຊ້ທາງການແພດ (ຜ້າອັດປາກ) ໃຫ້ແກ່ອົງການປົກຄອງແຂວງ ແລະ ເມືອງ ເປັນມູນຄ່າໜຶ່ງຕື້ກວ່າກີບ.



**2. ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງຊາດ ແລະ ທ້ອງຖິ່ນ**

**ກ. ການຕົກລົງບັນຫາສຳຄັນພື້ນຖານຂອງຊາດ:**

ເຂົ້າຮ່ວມໃນການພິຈາລະນາ ແລະ ຕົກລົງບັນຫາສຳຄັນພື້ນຖານຂອງຊາດ ໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ໄດ້ມີມະຕິຮັບຮອງເອົາຢູ່ 20 ສະບັບ ໃນນີ້, ວຽກງານບຸກຄະລາກອນ 3 ສະບັບ, ວຽກງານຂົງເຂດລັດຖະບານ 6 ສະບັບ, ວຽກງານຂົງເຂດສະພາແຫ່ງຊາດ 2 ສະບັບ ແລະ ວຽກງານການສ້າງ-ປັບປຸງກົດໝາຍ 9 ສະບັບ; ໄດ້ປຶກສາຫາລືວຽກງານລະຫວ່າງຄະນະ ສສຊ ປະຈຳເຂດເລືອກຕັ້ງທົ່ວປະເທດ ຮ່ວມກັບກຳມາທິການວຽກງານ ສສຊ ກ່ຽວກັບກົງຈັກການຈັດຕັ້ງຂອງ ສພຂ ຊຸດທີ II, ກົງຈັກການຈັດຕັ້ງຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ; ໄດ້ຄົ້ນຄວ້າພິຈາລະນາບັນຫາສຳຄັນພື້ນຖານຂອງຊາດຢູ່ເຂດເລືອກຕັ້ງຂອງຕົນ ດ້ວຍການຈັດຕັ້ງກອງປະຊຸມປະຈຳປີ 2021-2022 ດ້ວຍຜົນສຳເລັດເປັນຢ່າງດີ; ເຂົ້າຮ່ວມກອງປະຊຸມປຶກສາຫາລືວຽກງານກົງຈັກເສນາທິການຂອງສະພາປະຊາຊົນຂັ້ນແຂວງ ແລະ ນະໂຍບາຍຕໍ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ຕາມມາດຕາ 29 ແລະ ມາດຕາ 32 ຂອງກົດໝາຍວ່າການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ; ເຂົ້າຮ່ວມກອງປະຊຸມປຶກສາຫາລື ເຜີຍແຜ່ຜົນຂອງການຄົ້ນຄວ້າໃສ່ຮ່າງເບື້ອງຕົ້ນຜົນການສຶກສາ "ລະບົບຄຸ້ມຄອງ ແລະ ປະສິດທິພາບການລົງທຶນຂອງລັດໃນ ສປປລາວ" ແລະ "ລະບົບຄຸ້ມຄອງທີ່ດິນໃນ ສປປລາວ"; ເຂົ້າຮ່ວມກອງປະຊຸມປຶກສາຫາລືກ່ຽວກັບທິດທາງແຜນການຍົກສູງຂີດຄວາມສາມາດໃຫ້ແກ່ ສສຊ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໃນໄລຍະ 5 ປີ (2021-2025); ເຂົ້າຮ່ວມກອງປະຊຸມການສ້າງແຜນການກຳນົດພະນັກງານນຳພາ-ຄຸ້ມຄອງຂັ້ນສູນກາງຄຸ້ມຄອງ; ເຂົ້າຮ່ວມກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ແລະ ປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

**ຂ. ການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ:**

ເຂົ້າຮ່ວມໃນການພິຈາລະນາ ແລະ ຕົກລົງບັນຫາສຳຄັນພື້ນຖານ ຂອງທ້ອງຖິ່ນ ໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II ແລະ ໄດ້ມີມະຕິຮັບຮອງເອົາຢູ່ 4 ສະບັບ ໃນນີ້, ວຽງານຂອງອົງການປົກຄອງແຂວງ 2 ສະບັບ ແລະ ວຽກງານຂອງ ສພຂ 2 ສະບັບ; ເຂົ້າຮ່ວມກອງປະຊຸມປຶກສາຫາລືພາຍໃຕ້ຫົວຂໍ້: ຍູ້ແຮງການພັດທະນາບັນດາແຂວງພາກກາງ ເປັນໃຈກາງອຸດສາຫະກຳ-ການຄ້າ ແລະ ໂລຈິສຕິກ ຂອງປະເທດ; ເຂົ້າຮ່ວມກອງປະຊຸມປຶກສາຫາລືກ່ຽວກັບການຈັດງານວາງສະແດງ ແລະ ຈຳໜ່າຍສິນຄ້າສະເຫຼີມສະຫຼອງ 2 ວັນປະຫວັດສາດ ລາວ-ຫວຽດນາມ; ເຂົ້າຮ່ວມກອງປະຊຸມຄະນະກຳມະການຊີ້ນຳ ແລະ ກອງເລຂາປະສານງານຂັ້ນແຂວງ ກ່ຽວກັບການຈັດຕັ້ງປະຕິບັດມາດຕະການເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19 ພາຍໃນແຂວງ; ເຂົ້າຮ່ວມກອງປະຊຸມຮ່ວມກັບອົງການປົກຄອງແຂວງ ໃນການປຶກສາຫາລື ແລະ ກະກຽມໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II.

**3. ດ້ານການຕິດຕາມກວດກາ**

ໄດ້ສ້າງແຜນການເຄື່ອນໄຫວຕິດຕາມກວດກາ ຕິດພັນກັບແຜນການຕິດຕາມກວດກາຂອງຄະນະປະຈຳ ກໍຄືກຳມາທິການຕ່າງໆຂອງສະພາແຫ່ງຊາດ ແລະ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ; ໄລຍະຜ່ານມາໄດ້ເຄື່ອນໄຫວຕິດຕາມກວດກາຮ່ວມກັບຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການສະພາແຫ່ງຊາດ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ຄະນະສະເພາະກິດ ຄື:

ສສຊ ປະຈຳເຂດເລືອກຕັ້ງທີ 12 ທີ່ເປັນຄະນະປະຈຳສະພາແຫ່ງຊາດ ໄດ້ເຄື່ອນໄຫວຕິດຕາມກວດກາ, ຊຸກຍູ້ການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດ ແລະການເຄື່ອນໄຫວວຽກງານຂອງສະພາປະຊາຊົນຂັ້ນແຂວງຢູ່ແຂວງເຊກອງ, ແຂວງຈຳປາສັກ, ແຂວງອັດຕະປື; ໄດ້ພົບປະຢ້ຽມຢາມອຳນາດການປົກຄອງ ແລະ ປະຊາຊົນ ເມືອງວາປີ ແລະ ເມືອງຄົງເຊໂດນ ແຂວງສາລະວັນ ແລະ ຕາງໜ້າຄະນະປະຈຳສະພາແຫ່ງຊາດ ມອບເຄື່ອງຊ່ວຍເຫຼືອ (ອຸປະກອນກອງປະຊຸມທາງໄກ) ໃຫ້ ສພຂ ສາລະວັນ; ເຄື່ອນໄຫວຕິດຕາມກວດກາການສ້າງວິຊາຊີບ, ການພັດທະນາສີມືແຮງງານ, ການສ້າງວຽກເຮັດງານທຳຂອງປະຊາຊົນ ເພື່ອແກ້ໄຂບັນຫາການຫວ່າງງານ ແລະ ການຈັດຕັ້ງປະຕິບັດບັນດາຄາດໝາຍໃນຂົງເຂດວັດທະນະທຳ-ສັງຄົມ ຢູ່ເມືອງຄູນຄຳ, ເມືອງມະຫາໄຊ, ໂຮງຈັກ-ໂຮງງານ ແລະບັນດາພະແນກການຕ່າງໆທີ່ກ່ຽວຂ້ອງຂັ້ນແຂວງ; ເຄື່ອນໄຫວເກັບກຳຂໍ້ມູນ ແລະ ຕິດຕາມສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ນຳຄະນະທີ່ປຶກສາ, ອາຈານແພດອາວຸໂສ ທີ່ນະຄອນຫຼວງວຽງຈັນ. ພ້ອມນັ້ນ, ກໍສະເໜີມາດຕະການຕອບໂຕ້ ແລະ ແກ້ໄຂບັນຫາຕ່າງໆທີ່ຕິດພັນກັບການລະບາດຂອງພະຍາດດັ່ງກ່າວ; ເຂົ້າຮ່ວມກອງປະຊຸມທາງໄກຂອງກຳມາທິການວັດທະນະທຳ-ສັງຄົມ ເພື່ອແລກປ່ຽນຄຳຄິດຄຳເຫັນ ແລະ ຊີ້ແຈງຕໍ່ຄຳຊັກຖາມ ໃນຫົວຂໍ້: ແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດ ຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19; ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານສຶກສາທິການ ແລະ ກິລາທີ່ເມືອງໄຊບົວທອງ ແລະ ເມືອງບົວລະພາ; ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ດ່ານສາກົນສິນຄ້າທ່າບົກ-ທ່ານາແລ້ງ ແລະ ເຂດໂລຈິສຕິກ ນະຄອນຫຼວງວຽງຈັນ; ເຄື່ອນໄຫວຕິດຕາມກວດກາຮ່ວມກັບຄະນະປະຈຳສະພາແຫ່ງຊາດ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ອົງການປົກຄອງແຂວງ ແລະ ພະແນກການທີ່ກ່ຽວຂ້ອງ ໃນການເຮັດທົດລອງການຂຸດຄົ້ນບໍ່ເຫຼັກ ຢູ່ເມືອງຫີນບູນ ແຂວງຄຳມ່ວນ; ເຄື່ອນໄຫວຕິດຕາມກວດກາກ່ຽວກັບການຈັດຕັ້ງປະຕິບັດໂຄງການໄຟຟ້າຖ່ານຫີນ ຢູ່ເມືອງບົວລະພາ ແຂວງຄຳມ່ວນ; ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານ ຢູ່ເຂດໂລຈິສຕິກຂອງເຂດເສດຖະກິດສະເພາະທ່າແຂກ ແຂວງຄຳມ່ວນ; ເຄື່ອນໄຫວຕິດຕາມກວດກາກ່ຽວກັບການເຮັດທົດລອງອອກໃບຢັ້ງຢືນສິດນຳໃຊ້ທີ່ດິນ ທີ່ຢູ່ໃນເຂດສາມປະເພດປ່າ ທີ່ເມືອງເຊບັ້ງໄຟ ແລະ ການທົດລອງຂຸດຄົ້ນແຮ່ເຫຼັກທີ່ເມືອງຫີນບູນ; ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ວຽກງານ ຢູ່ດ່ານສາກົນຂົວມິດຕະພາບ 3 ແຂວງຄຳມ່ວນ; ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍໃນຂົງເຂດຕຸລາການ ແລະ ຍຸຕິທຳ ຮ່ວມກັບຄະນະກຳມະການຍຸຕິທຳ ປກສ-ປກຊ ສພຂ ຄຳມ່ວນ ຢູ່ 10 ເມືອງ ໂດຍຕິດພັນກັບວຽກງານຊຸກຍູ້ການປັບປຸງຄະນະປະສານງານປົກປ້ອງລະບຽບກົດໝາຍຂັ້ນເມືອງຊຸດໃໝ່; ໄດ້ສົມທົບກັບຄະນະປະຈຳ ສພຂ ໃນການແກ້ໄຂຄຳຮ້ອງທຸກຂອງພົນລະເມືອງ ໄດ້ທັງໝົດ 36 ເລື່ອງ, ແກ້ໄຂແລ້ວ 32 ເລື່ອງ, ກຳລັງສືບຕໍ່ຄົ້ນຄວ້າ 4 ເລື່ອງ ໃນນີ້, ຄຳຮ້ອງຂໍຄວາມເປັນທຳ 14 ເລື່ອງ, ສາມາດຄົ້ນຄວ້າ ແລະ ນຳສິ່ງພາກສ່ວນທີ່ກ່ຽວຂ້ອງ 10 ເລື່ອງ, ກຳລັງສືບຕໍ່ຄົ້ນຄວ້າ 4 ເລື່ອງ; ຄຳສະເໜີ 22 ເລື່ອງ ສາມາດຄົ້ນຄວ້າ ແລະ ນຳສິ່ງພາກສ່ວນທີ່ກ່ຽວຂ້ອງ 22 ເລື່ອງ.



# ແລກປ່ຽນບົດຮຽນ ລະຫວ່າງໜ່ວຍຊາວໜຸ່ມຮາກຖານຂອງ 2 ພາກສ່ວນ



(ສພຊ) ເມື່ອບໍ່ດົນມານີ້, ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ ໄດ້ຈັດກອງປະຊຸມແລກປ່ຽນບົດຮຽນລະຫວ່າງໜ່ວຍຊາວໜຸ່ມຄະນະໂຄສະນາອົບຮົມແຂວງ ກັບໜ່ວຍຊາວໜຸ່ມສະພາປະຊາຊົນແຂວງອຸດົມໄຊ ໂດຍການເປັນປະທານຮ່ວມຂອງສະຫາຍ ບຸນເສີນ ເຢືອນຂ້ວນພະຈັນ ເລຂາຊາວໜຸ່ມໜ່ວຍຮາກຖານຄະນະໂຄສະນາອົບຮົມແຂວງ ແລະ ສະຫາຍ ຄຳດອນ ສີປະເສີດ ເລຂາຊາວໜຸ່ມໜ່ວຍຮາກຖານ ສະພາປະຊາຊົນແຂວງ, ມີສະມາຊິກຊາວໜຸ່ມພາຍໃນຂອງ 2 ໜ່ວຍຮາກຖານເຂົ້າຮ່ວມ 24 ສະຫາຍ ຍິງ 11 ສະຫາຍ.

ກອງປະຊຸມໄດ້ຮັບຟັງການເຜີຍແຜ່ຜັນຂະຫຍາຍມູນເຊື້ອແຫ່ງການນຳພາຂອງພັກເຂົ້າໃນການຈັດຕັ້ງປະຕິບັດພາລະກິດປ່ຽນແປງໃໝ່ຢ່າງແຂງແຮງ ແລະ ເລິກເຊິ່ງ, ເນື່ອງໃນໂອກາດວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 68 ປີ (22 ມີນາ 1955-22 ມີນາ 2023) ສະເໜີໂດຍສະຫາຍ ບຸນເສີນ ເຢືອນຂ້ວນພະຈັນ. ພ້ອມດຽວກັນນີ້, ກອງປະຊຸມໄດ້ຮັບຟັງການລາຍງານໂດຍຫຍໍ້ ກ່ຽວກັບການເຄື່ອນໄຫວວຽກງານຂອງໜ່ວຍຊາວໜຸ່ມທັງ 2 ໜ່ວຍຮາກຖານ ເພື່ອພ້ອມກັນຄົ້ນຄວ້າ, ປະກອບຄຳເຫັນ, ແລກປ່ຽນຖອດຖອນບົດຮຽນເຊິ່ງກັນແລະກັນຢ່າງເລິກເຊິ່ງຂອງສະມາຊິກຊາວໜຸ່ມ 2 ໜ່ວຍດັ່ງກ່າວ ໃນການຈັດຕັ້ງປະຕິບັດວຽກງານ ເປັນຕົ້ນແມ່ນວຽກງານການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກຂອງຊາວໜຸ່ມປະຊາຊົນປະຕິວັດລາວ; ການຄັດເລືອກຜົນງານຂອງສະມາຊິກຊາວໜຸ່ມຜູ້ດີເດັ່ນ; ການຮ່ວມຊີວິດການເມືອງ; ການສ້າງຄອບຄົວຕົວແບບພາຍໃນໜ່ວຍ; ການຊອກແຫຼ່ງລາຍຮັບເຂົ້າຄັງ, ການສ້າງຕັ້ງ ແລະ ຄຸ້ມຄອງກອງທຶນພາຍໃນໜ່ວຍ; ການເກັບກຳຫາງສຽງຂອງສັງຄົມ; ການເປັນເສນາທິການໃຫ້ແກ່ການນຳ ແລະ ຫົວຂໍ້ອື່ນໆ.

ໃນຕອນທ້າຍ, ກອງປະຊຸມໄດ້ເປັນເອກະພາບກັນວາງຄາດໝາຍສູ້ຊົນໃນປີຕໍ່ໜ້າ ຄື: ສືບຕໍ່ຈັດກອງປະຊຸມແລກປ່ຽນ, ຖອດຖອນບົດຮຽນເຊິ່ງກັນແລະກັນ ໃຫ້ໄດ້ 1 ຄັ້ງຂຶ້ນໄປ ໂດຍການຜັດປ່ຽນກັນເປັນເຈົ້າພາບ.

(ແສງພອນ ອິນນະລົງ)

# ສະພາປະຊາຊົນແຂວງ ອວຍພອນກອງບັນຊາການກຳລັງປ້ອງກັນຄວາມສະຫງົບແຂວງອັດຕະປື

(ສພຊ) ຕອນບ່າຍວັນທີ 3 ເມສາ 2023 ສະຫາຍນາງ ມີນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງອັດຕະປພ້ອມດ້ວຍຄະນະ ໄດ້ນຳກະຕ່າຂອງຂວັນເຂົ້າອວຍພອນຄະນະພັກ, ຄະນະບັນຊາກອງບັນຊາການກຳລັງປ້ອງກັນຄວາມສະຫົງບແຂວງອັດຕະປື ເນື່ອງໃນໂອກາດວັນສ້າງຕັ້ງກອງບັນຊາການກຳລັງປ້ອງກັນຄວາມສະຫງົບໄດ້ໝູນວຽນມາບັນຈົບຄົບຮອບ 62 ປີ (5 ເມສາ 1961-5 ເມສາ 2023) ແລະ ວັນສ້າງຕັ້ງກອງບັນຊາການກຳລັງປ້ອງກັນຄວາມສະຫງົບ ແຂວງອັດຕະປື ຄົບຮອບ 59 ປີ (5 ເມສາ 1964-5 ເມສາ 2023) ໂດຍການຕ້ອນຮັບຂອງສະຫາຍ ພົວ. ສີເວີນ ແກ້ວສີວົງສາ ຫົວໜ້າກອງບັນຊາການກຳລັງປ້ອງກັນຄວາມສະຫງົບແຂວງອັດຕະປື ພ້ອມດ້ວຍຄະນະ.

ສະຫາຍ ນາງ ມີນາພອນ ໄຊສົມພູ ໄດ້ຕາງໜ້າຄະນະນຳສະພາປະຊາຊົນແຂວງ ແລະ ປະຊາຊົນລາວບັນດາເຜົ່າຊາວແຂວງອັດຕະປື ສະແດງຄວາມຊົມເຊີຍຄະນະພັກ, ຄະນະບັນຊາກອງບັນຊາການກຳລັງປ້ອງກັນຄວາມສະຫງົບແຂວງ ທີ່ໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດວຽກງານໄລຍະຜ່ານມາ ແລະ ການປະກອບສ່ວນອັນສຳຄັນໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ກໍຄືແຂວງອັດຕະປື ເຫັນໄດ້ພາລະກິດຂອງກຳລັງ ປກສ ໃນຍຸກໃໝ່ ແມ່ນຕ້ານກົນອຸບາຍຂອງກຸ່ມຄົນບໍ່ດີທີ່ມີເຈດຕະນາຕໍ່ປະເທດຊາດ ກໍຄືແຂວງອັດຕະປື ແລະ ຍັງຕ້ອງສ້າງສັງຄົມໃຫ້ມີຄວາມສະຫງົບປອດໄພ, ສ້າງສະພາບແວດລ້ອມໃຫ້ປະຊາຊົນ ມີຄວາມອຸ່ນອ່ຽນໃຈໃນການດຳລົງຊີວິດ, ການທຳມາຫາກິນຢ່າງສະຫງົບສັນຕິ, ເປັນເຈົ້າການເອົາໃຈໃສ່ຊຸກຍູ້ພໍ່ແມ່ປະຊາຊົນໃຫ້ເປັນເຈົ້າການຕົນເອງ ແລະ ປະຕິບັດກົດລະບຽບໃນການດຳລົງຊີວິດ ເຮັດໃຫ້ທົ່ວສັງຄົມມີຄວາມສະຫງົບຢ່າງຕໍ່ເນື່ອງ.

ພ້ອມນີ້, ສະຫາຍ ພົວ. ສີເວີນ ແກ້ວສີວົງສາ ກ່າວສະແດງຄຳຂອບໃຈ ນຳສະພາປະຊາຊົນແຂວງ ທີ່ເຫັນໄດ້ຄວາມໝາຍຄວາມສຳຄັນທາງປະຫວັດສາດຂອງວຽກງານກຳລັງ ປກສ ທີ່ໄດ້ນຳພາຄະນະມາອວຍພອນໃນວັນສຳຄັນວັນສ້າງຕັ້ງກຳລັງ ປກສ ຄົບຮອບໃນຄັ້ງນີ້.

(ວິນັດ)

# ປະທານ ສພຂ ຫົວພັນ ພົບປະປະຊາຊົນ ຢູ່ເມືອງກວັນ ແລະ ເມືອງຊຳໃຕ້

(ສພຊ) ໂດຍປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສະພາແຫ່ງຊາດ (ສສຊ) ແລະ ສະພາປະຊາຊົນຂັ້ນແຂວງ (ສສຂ) ໃນນາມເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າໃນທົ່ວແຂວງ ແລະ ທົ່ວເມືອງ ເພື່ອເຮັດໃຫ້ຜູ້ມີສິດເລືອກຕັ້ງໄດ້ຮັບຮູ້ ແລະ ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງຊາດ, ຂອງແຂວງ.

ໃນລະຫວ່າງວັນທີ 22-24 ມີນາຜ່ານມາ, ສສຊ ແລະ ສສຂ ນຳໂດຍທ່ານ ນາງ ອຳໄພວອນ ລ້ອມບຸນແພງ ປະທານສະພາປະຊາຊົນແຂວງຫົວພັນ ທັງເປັນຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ແລະ ທ່ານ ວຽງພອນ ພົມມະຈັນ ສສຂ ປະຈຳເຂດເລືອກຕັ້ງເມືອງກວັນ ພ້ອມທີມງານ ໄດ້ເຄື່ອນໄຫວຈັດຕັ້ງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ສະພາປະຊາຊົນແຂວງຫົວພັນ ຊຸດທີ II ໄດ້ 4 ຈຸດ, 4 ບ້ານຄື: ບ້ານສົບກັງ, ບ້ານພຽງໂພ, ບ້ານພຽງດີ ແລະ ບ້ານພຽງມອນ ເມືອງກວັນ ແຂວງຫົວພັນ; ມີຜູ້ເຂົ້າຮ່ວມຮັບຟັງທັງໝົດ346 ຄົນ ຍິງ 156 ຄົນ.

ຈຸດປະສົງການລົງພົບປະປະຊາຊົນ ກໍເພື່ອເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ, ສະພາປະຊາຊົນແຂວງ ແລະ ສອງວາລະແຫ່ງຊາດ ໃຫ້ພະນັກງານ ແລະ ພໍ່ແມ່ປະຊາຊົນພາຍໃນບ້ານດັ່ງກ່າວ ໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ທັງເປັນການລົງພົບປະຢ້ຽມຢາມ ແລະ ຮັບຟັງຄຳຄິດເຫັນ, ຄຳສະເໜີຂອງປະຊາຊົນ ກໍຄືຜູ້ມີສິດເລືອກຕັ້ງ ແລະ ຮັບເອົາຄຳສະເໜີ ນຳໄປຄົ້ນຄວ້າ ແລະ ສະເໜີຕໍ່ຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອນຳໄປແກ້ໄຂໃນຕໍ່ໜ້າ.



ໃນໂອກາດນີ້, ສສຊ ແລະ ສສຂ ໄດ້ຜັດປ່ຽນກັນຂຶ້ນເຜີຍແຜ່ ແລະ ອະທິບາຍພ້ອມທັງຊີ້ແຈງບາງຄຳສະເໜີຂອງຜູ້ມີສິດເລືອກຕັ້ງ ແລະ ໄດ້ເນັ້ນໜັກໃຫ້ຜູ້ມີສິດເລືອກຕັ້ງພ້ອມກັນສູ້ຊົນເອົາໃຈໃສ່ຈັດຕັ້ງປະຕິບັດສອງວາລະແຫ່ງຊາດນັ້ນໃຫ້ປາກົດຜົນເປັນຈິງ ພ້ອມກັນຮັກສາມູນເຊື້ອຄວາມສາມັກຄີຊ່ວຍເຫຼືອເຊິ່ງກັນແລະກັນ, ອະນຸລັກຮັກສາຮີດຄອງປະເພນີອັນດີງາມຂອງຊາດ-ຂອງເຜົ່າ, ມີຄວາມດຸໝັ່ນຂະຫຍັນພຽນໃນການທຳການຜະລິດ ເປັນຕົ້ນແມ່ນດ້ານການປູກ-ການລ້ຽງ, ປູກມອນລ້ຽງມ້ອນ ຕ່ຳຫູກທໍໄໝ ອັນເປັນມູນເຊື້ອ ໃຫ້ກາຍເປັນສິນຄ້າ ເພື່ອສ້າງເສດຖະກິດຄອບຄົວໃຫ້ດີຂຶ້ນ ພ້ອມກັນຕໍ່ຕ້ານປາກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນພາຍໃນບ້ານໃຫ້ນັບມື້ນັບຫຼຸດໜ້ອຍຖອຍລົງເທື່ອລະກ້າວ, ປົກປັກຮັກສາຊັບພະຍາກອນປະໄມ້ທີ່ເປັນແຫຼ່ງນ້ຳເພື່ອບໍ່ໃຫ້ນ້ຳບົກແຫ້ງ, ສະກັດກັ້ນອັກຄີໄພບໍ່ໃຫ້ໄຟໄໝ້ລາມປ່າ ແລະ ການນຳໃຊ້ຟືນໄຟເຂົ້າໃນການດຳລົງຊີວິດໃຫ້ຮັບປະກັນຄວາມປອດໄພ.

ການເຄື່ອນໄຫວຄັ້ງນີ້, ສສຊ ແລະ ສສຂ ຍັງໄດ້ນຳເອົາໂທລະໂຄ່ງ ຈຳນວນ 2 ຊຸດມອບໃຫ້ບ້ານສົມໂຮມ ແລະ ບ້ານສົບກັງ ພ້ອມທັງມອບເຄື່ອງນຸ່ງຫົ່ມ ແລະ ອຸປະກອນການຮຽນໃຫ້ບ້ານ ເພື່ອມອບຕໍ່ໃຫ້ຄອບຄົວທີ່ຍັງທຸກຍາກ; ໃນການເຄື່ອນໄຫວ ສສຊ ແລະ ສສຂ ຍັງໄດ້ຕິດຕາມການເກັບຊື້ໃບຊາຂອງບໍລິສັດ ເຄພີການຄ້າ ສິ່ງເສີມ ແລະ ພັດທະນາກະສິກຳ ແລະ ລົງຕິດຕາມກວດກາການໂຄງການກໍ່ສ້າງຂົວຂ້າມນ້ຳລິກ ເມືອງກວັນ-ແດນດິນຕື່ມອີກ.

ຈາກນັ້ນ, ໃນລະຫວ່າງວັນທີ 25-27 ມີນາ, ທ່ານນາງ ອຳໄພວອນ ລ້ອມບຸນແພງ ຍັງໄດ້ເຄື່ອນໄຫວສືບຕໍ່ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນດັ່ງກ່າວ ຢູ່ເມືອງຊຳໃຕ້ ໂດຍໄດ້ສົມທົບກັບທ່ານ ເພັດໄຊ ວິໄລທອງ ສສຂ ປະຈຳເຂດເລືອກຕັ້ງເມືອງຊຳໃຕ້ ພ້ອມດ້ວຍທີມງານ ໄດ້ 3 ຈຸດ 2 ບ້ານ ຄື: ບ້ານນາຫຼ້າ ແລະ ບ້ານນາເກືອ ແລະ ເທສະບານເມືອງຊຳໃຕ້; ເຂົ້າຮ່ວມມີບັນດາທ່ານການນຳເມືອງ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ພ້ອມດ້ວຍປະຊາຊົນພາຍໃນເທສະບານເມືອງ ແລະ ປະຊາຊົນ 2 ບ້ານດັ່ງກ່າວ ເຂົ້າຮ່ວມທັງຫມົດ 402 ທ່ານ ຍິງ 177 ທ່ານ.

ໂອກາດດຽວກັນນີ້, ຄະນະທີມງານ ຍັງໄດ້ນຳເອົາເຄື່ອງຊ່ວຍເຫຼືອຈຳນວນໜຶ່ງເປັນຕົ້ນຜ້າຫົ່ມ, ໝອນ, ເຄື່ອງນຸ່ງຫົ່ມ, ເກີບ, ປື້ມຂຽນ ມອບໃຫ້ບ້ານນາເກືອ ເພື່ອມອບຕໍ່ຄອບຄົວຜູ້ທີ່ທຸກຍາກ ແລະ ໄດ້ຢ້ຽມຢາມບ່ອນເກັບຊື້ກາເຟຂອງບໍລິສັດ ຢູ່ນີ້ຄ້ອຟຝີ, ສວນກາເຟຂອງປະຊາຊົນບ້ານນາຫຼ້າ ແລະ ຕິດຕາມກວດກາໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຊຳ 1A ຕື່ມອີກ.

(ເວີນ ແກ້ວບຸນມີ)



# ເຂດເລືອກຕັ້ງທີ 13 ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ໄດ້ 116 ຈຸດ

ກົມສື່ມວນຊົນ ຄະນະເລຂາທິການສະພາແຫ່ງຊາດ ໄດ້ຮ່ວມກັບລາຍການ "ຄົ້ນຫາມາເລົ່າ" ຂອງໂທລະພາບແຫ່ງຊາດລາວ ໄດ້ຈັດການສຳພາດບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງຕ່າງໆທົ່ວປະເທດ ເນື່ອງໃນໂອກາດທີ່ບັນດາທ່ານ ສສຊ ໄດ້ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງທ່ານ ກົງແກ້ວ ມີວໍລະຈັກ ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ທັງເປັນປະທານສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ໄດ້ໃຫ້ສຳພາດວ່າ: ໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 3-4 ຄະນະ ສສຊ ປະຈຳເຂດເລືອກຕັ້ງ ກໍຄື ສພຂ ສາມາດຍາດໄດ້ຜົນງານທີ່ພົ້ນເດັ່ນຕາມ 3 ພາລະບົດບາດຄື:

**ດ້ານນິຕິບັນຍັດ:** ໄດ້ຈັດຕັ້ງຜັນຂະຫຍາຍແຜນດຳເນີນງານຂອງຄະນະປະຈຳສະພາແຫ່ງຊາດ ຊຸດທີ IX (2021-2025), ເປັນເຈົ້າການຈັດຕັ້ງທາບທາມການປະກອບຄຳເຫັນໃສ່ຮ່າງກົດໝາຍ ຈຳນວນ 12 ສະບັບ, ຄົ້ນຄວ້າປະກອບຄຳເຫັນໃສ່ຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງທີ່ດິນບໍລິເວນນ້ຳ, ປຶກສາຫາລື ແລະ ປະກອບຄຳເຫັນໃສ່ຮ່າງຂໍ້ຕົກລົງວ່າດ້ວຍການພົວພັນລະຫວ່າງຄະນະປະຈຳສະພາແຫ່ງຊາດກັບຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ຄົ້ນຄວ້າ ແລະ ປຶກສາຫາລືວຽກງານຮ່ວມກັບຄະນະຮັບຜິດຊອບປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ໃນຂົງເຂດຍຸຕິທຳ; ເຂົ້າຮ່ວມກອງປະຊຸມສຳມະນາກ່ຽວກັບການເຜີຍແຜ່ກົດໝາຍ, ການດຳເນີນທຸລະກິດຂອງລັດວິສາຫະກິດໄຟຟ້າລາວ, ການພັດທະນາລະບົບສາຍສົ່ງໄຟຟ້າແຫ່ງຊາດ ແລະ ການພັດທະນາທ່າບົກ, ນະໂຍບາຍ ແລະ ການລົງທຶນເຂົ້າໃນລະບົບປົກປ້ອງສັງຄົມ. ນອກຈາກນີ້, ໄດ້ຄົ້ນຄວ້າປຶກສາຫາລືວຽກງານກ່ຽວກັບການສ້າງນິຕິກຳຂອງທ້ອງຖິ່ນ ທີ່ຈະນຳພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II.

**ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງຊາດ ແລະ ທ້ອງຖິ່ນ:** ຊຸກຍູ້ໃຫ້ທຸກພາກສ່ວນຮ່ວມມືກັນໃນການປະຕິບັດ 2 ວາລະແຫ່ງຊາດ; ຄົ້ນຄວ້າປຶກສາຫາລືປະກອບຄຳເຫັນຕໍ່ວຽກງານກ່ຽວກັບການແກ້ໄຂບັນຫາທາງດ້ານເສດຖະກິດ-ສັງຄົມ ແລະ ວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃນສະພາບການລະບາດຂອງພະຍາດໂຄວິດ-19; ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຄົ້ນຄວ້າ, ການພິຈາລະນາຮັບຮອງເອົາບັນດາມະຕິຂອງກອງປະຊຸມຈຳນວນ 20 ສະບັບ ແລະ ຮັບຮອງກົດໝາຍ 9 ສະບັບ ໃນນີ້ ກົດໝາຍສ້າງໃໝ່ 3 ສະບັບ, ກົດໝາຍປັບປຸງ 6 ສະບັບ; ຄົ້ນຄວ້າປຶກສາຫາລືວຽກງານການສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງຂັ້ນສູນກາງ; ປຶກສາຫາລືກ່ຽວກັບແຜນຄຸ້ມຄອງອ່າງຮັບນ້ຳຂອງໂຄງການເຂື່ອນໄຟຟ້າ ຕາດສະໂຄ່ຍ ເມືອງເຊໂປນ; ຄົ້ນຄວ້າລະບົບຄຸ້ມຄອງ ແລະ ປະສິດທິພາບການລົງທຶນຂອງລັດ ໃນ ສປປລາວ ແລະ ລະບົບການຄຸ້ມຄອງທີ່ດິນໃນ ສປປລາວ. ນອກຈາກນີ້, ກໍໄດ້ຄົ້ນຄວ້າວຽກງານໃນການຮັບຮອງເອົາການສະເໜີແຕ່ງຕັ້ງ, ຍົກຍ້າຍພະນັກງານນຳພາຄຸ້ມຄອງຂອງອົງການປົກຄອງແຂວງ ແລະ ວຽກງານສັບຊ້ອນພະນັກງານທີ່ຍົກຍ້າຍປະຈຳການຂອງສະພາປະຊາຊົນແຂວງ.

**ດ້ານການຕິດຕາມກວດກາ:** ຕິດຕາມກວດກາກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຢູ່ຂັ້ນເມືອງ 14 ເມືອງ ແລະ 1 ນະຄອນ ໄດ້ 4 ຄັ້ງ; ຕິດຕາມກວດກາໂຄງການສ້ອມແປງຊົນລະປະທານ, ການຂຸດຄົ້ນບໍ່ເຫຼັກ, ເຂດສຳປະທານທີ່ດິນຂຸດຄົ້ນບໍ່ຄຳ ແລະ ຊຸກຍູ້ການຜະລິດກະສິກຳ, ການສ້າງວິຊາຊີບ, ການພັດທະນາສີມືແຮງງານ, ການສ້າງວຽກເຮັດງານທຳຂອງປະຊາຊົນ ເພື່ອແກ້ໄຂ



ບັນຫາວ່າງງານ ລວມໄດ້ 8 ຄັ້ງ; ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ຊຸກຍູ້ການພັດທະນາຊົນນະບົດຢູ່ເມືອງທ່າປາງທອງ, ສອງຄອນ, ຈຳພອນ, ໄຊບູລີ, ອາດສະພັງທອງ, ຈຸດສຸມຈຽງຕູບເມືອງເຊໂປນ, ເມືອງນອງ ແລະ ເມືອງວິລະບູລີ. ນອກນີ້, ກໍໄດ້ຕິດຕາມກວດກາການປ່ອຍນ້ຳລົງສູ່ຄອງໃໝ່ຂອງໂຄງການຂະຫຍາຍບໍ່ຄຳເຊໂປນ ແລະ ຢ້ຽມຢາມບ້ານຈັດສັນທີ່ໄດ້ຮັບຜົນກະທົບການກໍ່ສ້າງເຂື່ອນໄຟຟ້າເຊລະນອງ 1.

ທ່ານໃຫ້ຮູ້ຕື່ມວ່າ: ໂດຍປະຕິບັດຕາມຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການພົບປະກັບປະຊາຊົນ ແລະ ໂຄສະນາເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ເຄື່ອນໄຫວພົບປະທັງໝົດ 116 ຈຸດ ກວມເອົາ 85 ກຸ່ມບ້ານ, 17 ກົມກອງ ແລະ 14 ເທສະບານເມືອງ 1 ເທສະບານນະຄອນ ເຊິ່ງມີຜູ້ມີສິດເລືອກຕັ້ງເຂົ້າຮ່ວມຮັບຟັງທັງໝົດ 15.218 ຄົນ ຍິງ 5.939 ຄົນ.

ຜ່ານການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ຕິດຕາມກວດກາ ສາມາດສັງລວມບັນຫາທີ່ປະຊາຊົນສະເໜີຫຼາຍແມ່ນຂົງເຂດຍຸຕິທຳ, ປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ ມີ 6 ຄຳສະເໜີ ໂດຍສະເພາະແມ່ນກ່ຽວກັບການແກ້ໄຂບັນຫາຢາເສບຕິດ, ການເຮັດບັດຜ່ານແດນ ແລະ ບັດປະຈຳຕົວ ເຫັນວ່າມີຫຼາຍຂັ້ນຕອນ ແລະ ຫຍຸ້ງຍາກ; ຂົງເຂດເສດຖະກິດ-ການເງິນ ມີ 53 ຄຳສະເໜີ ໃນນີ້, ຂົງເຂດໂຍທາທິການ ແລະ ຂົນສົ່ງມີ 12 ຄຳສະເໜີ, ກະສິກຳ ແລະ ປ່າໄມ້ 10 ຄຳສະເໜີ, ພະລັງງານບໍ່ແຮ່ 9 ຄຳສະເໜີ, ອຸດສະຫະກຳ ແລະ ການຄ້າ 7 ຄຳສະເໜີ ແລະ ຂະແໜງເຂດອື່ນໆ; ຂົງເຂດວັດທະນະທຳ-ສັງຄົມ ມີ 18 ຄຳສະເໜີ ສ່ວນຫຼາຍແມ່ນເວົ້າເຖິງຕົວເລກລັດຖະກອນຄູອາສາ, ບັນຫາວຽກເຮັດງານທຳ ແລະ ບັນຫາອື່ນໆ.

ປະຊາຊົນມີຄວາມສົນໃຈ ແລະ ສະເໜີຫຼາຍແມ່ນການກໍ່ສ້າງ ແລະ ສ້ອມແປງພື້ນຖານໂຄງລ່າງ ເປັນຕົ້ນເສັ້ນທາງເຂດຫ່າງໄກສອກຫຼີກ, ການກໍ່ສ້າງ, ສ້ອມແປງຊົນລະປະທານ, ການຂະຫຍາຍຕາຄ່າຍໄຟຟ້າເປັນຕົ້ນ ໂດຍທ່ານໃຫ້ຮູ້ວ່າ ສພຂ ໄດ້ມີມາດຕະການ ແລະ ຄາດໝາຍສູ້ຊົນຄື: ຄະນະສະມາຊິກສະພາແຫ່ງຊາດ ກໍຄື ສພຂ ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຕາມກົດໝາຍກຳນົດ ໃຫ້ເລິກເຊິ່ງ ແລະ ກວ້າງຂວາງ; ອົງການປົກຄອງແຂວງ ໃຫ້ເອົາໃຈໃສ່ສຸມໃສ່ວຽກງານການພັດທະນາພື້ນຖານໂຄງລ່າງ ໂດຍສະເພາະເຂດຊົນນະບົດ ແລະ ເຂດຫ່າງໄກຊອກຫຼີກ ຢ່າງມີຈຸດສຸມເພື່ອການພັດທະນາ ແລະ ເຊື່ອມໂຍງເສດຖະກິດ; ອົງການປົກຄອງແຂວງ ນອກຈາກມີນະໂຍບາຍ ແລະ ຊຸກຍູ້ໃຫ້ປະຊາຊົນຜະລິດກະສິກຳ ເພື່ອທົດແທນການນຳເຂົ້າແລ້ວຕ້ອງຮັບປະກັນດ້ານລາຄາສິນຄ້າ ແລະ ຮັບປະກັນຕະຫຼາດເພື່ອຮັບຮອງສິນຄ້າຂອງປະຊາຊົນອີກດ້ວຍ; ເພີ່ມທະວີຄວາມສາມັກຄີພາຍໃນພັກ ໃຫ້ເປັນປຶກແຜນແໜ້ນໜາ ເພື່ອເຮັດສຳເລັດໜ້າທີ່ທີ່ພັກ-ລັດມອບໝາຍໃຫ້ຢ່າງມີປະສິດທິຜົນ.

ສຳລັບທິດທາງໃນຕໍ່ໜ້າຄະນະ ສສຊ ປະຈຳເຂດເລືອກຕັ້ງ ກໍຄື ສພຂ ມີຄາດໝາຍສູ້ຊົນ ທ່ານໃຫ້ຮູ້ວ່າ: ພາຍຫຼັງສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດຊຸດທີ IX ຈະໄດ້ສຸມໃສ່ບາງແຜນວຽກຈຸດສຸມເປັນຕົ້ນການຍົກສູງຄຸນນະພາບ ແລະ ປະສິດທິຜົນໃນການສ້າງ ແລະ ປັບປຸງກົດໝາຍ ໃຫ້ສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມໃນໄລຍະໃໝ່ ແລະ ມີຄວາມຍືນຍົງ, ນຳພາ-ຊີ້ນຳການຄົ້ນຄວ້າປະກອບຄຳເຫັນຕໍ່ການປັບປຸງເນື້ອໃນຂອງບັນດາຮ່າງກົດໝາຍ ຕາມແຜນການສ້າງ ແລະ ປັບປຸງກົດໝາຍ ປະຈຳປີ 2023 ຈຳນວນ 30 ສະບັບ (ກົດໝາຍສ້າງໃໝ່ 10 ສະບັບ, ກົດໝາຍປັບປຸງ 20 ສະບັບ) ເພື່ອຮັບປະກັນດ້ານເນື້ອໃນ ກ່ອນນຳເຂົ້າພິຈາລະນາຮັບຮອງ ຢູ່ກອງປະຊຸມສະໄໝສາມັນເທື່ອທີ 5 ແລະ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX; ຮັບປະກັນການຕົກລົງບັນຫາສຳຄັນທີ່ເປັນພື້ນຖານຂອງປະເທດຊາດໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງປະເທດ; ອັນສຳຄັນພວກຂ້າພະເຈົ້າຈະສຸມໃສ່ສືບຕໍ່ຕິດຕາມກວດກາຕາມມະຕິກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX, ຕິດຕາມກວດກາໂຄງການລົງທຶນຂະໜາດໃຫຍ່ທີ່ເຫັນວ່າມີຄວາມຫຍຸ້ງຍາກເປັນຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນພາຍໃນເຂດເລືອກຕັ້ງ ການພົບປະຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ, ແຂກຕ່າງປະເທດ, ເຂົ້າຮ່ວມຢ້ຽມຢາມປະເທດເພື່ອນມິດຍຸດທະສາດ ແລະ ເຂົ້າຮ່ວມກອງປະຊຸມລັດຖະສະພາສາກົນ ແລະ ບັນດາປະເທດອາຊຽນ ຕາມສະພາບເງື່ອນໄຂຕົວຈິງໃນໄລຍະໃໝ່. ນອກນັ້ນ, ກໍໄດ້ກະກຽມເປີດກອງປະຊຸມຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 13 ປະຈຳປີ 2022, ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ເຊິ່ງຈັດຂຶ້ນໃນທ້າຍເດືອນມັງກອນ 2023 ແລະ ໄດ້ຈັດຕັ້ງປະຕິບັດຄຳສັ່ງແນະນຳຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX.

ໂອກາດດຽວກັນນີ້, ທ່ານ ກົງແກ້ວ ມີວໍລະຈັກ ໄດ້ສະເໜີວ່າ: ສສຊ ໃນນາມເປັນຕົວແທນຂອງປະຊາຊົນ ຂໍສະເໜີຮຽກຮ້ອງອົງການຈັດຕັ້ງພັກ-ລັດ ໃຫ້ຮ່ວມມືກັນໃນການຊຸກຍູ້ ກໍຄືການຈັດຕັ້ງປະຕິບັດກົດໝາຍ ກໍຄືການຈັດຕັ້ງປະຕິບັດແຜນສະພາບການພັດທະນາເສດຖະກິດ, ແຜນງົບປະມານແຫ່ງລັດ, ມະຕິກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ຊຸດທີ VIII, ຊຸດທີ IX ທີ່ໄດ້ຮັບຮອງໄປແລ້ວນັ້ນ ເພື່ອຮັບປະກັນການປະຕິບັດໜ້າທີ່ການເມືອງ ທີ່ໄດ້ຮັບມອບໝາຍໃຫ້ມີຄຸນນະພາບສູງ; ສະເໜີມາຍັງອົງການຈັດຕັ້ງພັກ-ລັດ ສະໜອງງົບປະມານເພີ່ມແກ່ຄະນະ ສສຊ ກໍຄື ສພຂ ເຂົ້າໃນການຕິດຕາມກວດກາ ແລະ ລົງພົບປະຊຸກຍູ້ປະຊາຊົນໃຫ້ຫຼາຍຂຶ້ນ ທັງເປັນການຫັນລົງຫາກຖານ ແລະ ໃກ້ຊິດຕິດແທດກັບຜູ້ມີສິດເລືອກຕັ້ງ.



# ຢ້ຽມຢາມແຂວງຊຽງແຕງ ແຫ່ງລາຊະອານາຈັກກຳປູເຈຍ ຢ່າງເປັນທາງການ



(ສພຊ) ໃນວັນທີ 21 ມີນາ 2023 ຄະນະບໍລິຫານງານສະມາຄົມມິດຕະພາບລາວ-ກຳປູເຈຍ ແຂວງອັດຕະປື ນຳໂດຍທ່ານ ນາງ ມີນາພອນ ໄຊສົມພູ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ທັງເປັນປະທານຄະນະບໍລິຫານງານສະມາຄົມມິດຕະພາບລາວ-ກຳປູເຈຍ ແຂວງອັດຕະປື ພ້ອມດ້ວຍຄະນະເດີນທາງເຂົ້າຢ້ຽມຢາມການນຳຂັ້ນສູງ ແຂວງຊຽງແຕງ ແຫ່ງຣາຊະອານາຈັກກຳປູເຈຍ ນຳໂດຍທ່ານ ຊຽງລັກ ຮອງເລຂາພັກແຂວງ ປະທານສະພາປະຊາຊົນແຂວງ ຊຽງແຕງ ພ້ອມດ້ວຍຄະນະ.

ໃນໂອກາດດັ່ງກ່າວ, ສະຫາຍ ຊຽງລັກ ໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນ ແລະ ຕີລາຄາສູງຕໍ່ການຢ້ຽມຢາມຂອງຄະນະບໍລິຫານງານສະມາຄົມມິດຕະພາບລາວ-ກຳປູເຈຍ ແຂວງອັດຕະປື ໃນຄັ້ງນີ້ ແລະ ລາຍງານສະພາບທີ່ພົ້ນເດັ່ນໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ລວມທັງຜົນສຳເລັດໃນການຈັດຕັ້ງປະຕິບັດວຽກງານແຜນພັດທະນາເສດຖະກິດ-ສັງຄົມໂດຍຫຍໍ້ ແລະ ຈະເພີ່ມທະວີການພົວພັນຮ່ວມມືມິດຕະພາບ, ສາມັກຄີ ຖານບ້ານໃກ້ເຮືອນຄຽງລະຫວ່າງສອງແຂວງ ຊຽງແຕງ ແລະ ແຂວງອັດຕະປື ໃຫ້ຮັດແໜ້ນ ແລະ ມີປະສິດທິຜົນດີກວ່າເກົ່າ.

ໂອກາດດຽວກັນ, ສະຫາຍ ນາງ ມີນາພອນ ໄຊສົມພູ ໄດ້ສະແດງຄວາມຂອບໃຈຢ່າງສູງ ທີ່ປະທານສະພາປະຊາຊົນແຂວງ ພ້ອມຄະນະ ໄດ້ສະຫຼະເວລາ ແລະ ຕ້ອນຮັບ ຄະນະບໍລິຫານງານສະມາຄົມມິດຕະພາບ ລາວ-ກຳປູເຈຍ ແຂວງອັດຕະປື ຢ່າງອົບອຸ່ນ; ໃນການເຂົ້າຢ້ຽມຢາມ ແລະ ທັງເປັນການສະເໜີໂຕ ເນື່ອງຈາກສະມາຄົມມິດຕະພາບລາວ-ກຳປູເຈຍ ແຂວງອັດຕະປື ຫາກໍ່ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 30 ມິຖຸນາ 2022 ຜ່ານມາ ເຊິ່ງເປັນການນຳເອົາໄມຕີຈິດມິດຕະພາບທີ່ສະໜິດສະໜົມ ແລະ ການເສີມຂະຫຍາຍສາຍພົວພັນການຮ່ວມມືຮອບດ້ານລະຫວ່າງແຂວງອັດຕະປື ແລະ ແຂວງຊຽງແຕງ ທັງເປັນການປະກອບສ່ວນສຳຄັນເຂົ້າໃນການຮັດແໜ້ນມູນເຊື້ອຄວາມສາມັກຄີ ທີ່ມີຊາຍແດນຕິດຈອດລະຫວ່າງແຂວງ, ເມືອງ ໃຫ້ປະຊາຊົນສອງແຂວງໄປມາຫາສູ່, ຖານບ້ານໃກ້ເຮືອນຄຽງ, ບ້ານແກ່ວເມືອງດອງທີ່ດີ ໃຫ້ມີຄວາມໝັ້ນຄົງຍາວນານ ລະຫວ່າງສອງປະເທດ ກໍຄືສອງແຂວງໃຫ້ນັບມື້ນັບແໜ້ນແຟ້ນຍິ່ງໆຂຶ້ນ.

ໃນຕອນຄ່ຳຂອງວັນດຽວກັນ, ການນຳຂັ້ນສູງແຂວງຊຽງແຕງ ກໍໄດ້ເປັນເຈົ້າພາບຈັດງານລ້ຽງຕ້ອນຮັບ ເພື່ອເປັນກຽດແກ່ຄະນະບໍລິຫານງານສະມາຄົມມິດຕະພາບລາວ-ກຳປູເຈຍ ແຂວງອັດຕະປື ເຊິ່ງດຳເນີນໄປດ້ວຍບັນຍາກາດໄມຕີຈິດມິດຕະພາບ, ອົບອຸ່ນ ແລະ ຄວາມສາມັກຄີຮັກແພງສະໜິດສະໜົມແຕ່ຕົ້ນຕະຫຼອດປາຍ.

(ວິນັດ)

# ປະທານ ສພຂ ຕິດຕາມ ການປ່ອຍສິນເຊື່ອໃຫ້ປະຊາຊົນບ້ານດົງໜ້ອງ

(ສພຊ) ຕອນເຊົ້າຂອງວັນທີ 29 ມີນາ 2023 ທ່ານ ສີເຮັງ ຫອມສົມບັດ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 14 ທັງເປັນປະທານສະພາປະຊາຊົນແຂວງ (ສພຂ) ສາລະວັນ ພ້ອມດ້ວຍທ່ານ ດຣ. ພົດສະໄໝ ເຂັມວິໄລ ຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງສາລະວັນ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ພົບປະພໍ່ແມ່ປະຊາຊົນ, ຕິດພັນກັບການຕິດຕາມການປ່ອຍສິນເຊື່ອຂອງກອງທຶນບ້ານສາມັກຄີແນວລາວສ້າງຊາດ ບ້ານດົງໜ້ອງ ເມືອງສາລະວັນ ແຂວງສາລະວັນ ໂດຍການຕ້ອນຮັບ ແລະ ເຂົ້າຮ່ວມຂອງເລຂາພັກບ້ານນາຍບ້ານ ປະທານກອງທຶນບ້ານສາມັກຄີແນວລາວສ້າງຊາດ ຕະຫຼອດຮອດພໍ່ແມ່ປະຊາຊົນພາຍໃນບ້ານດົງໜ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.



ທ່ານ ສີລາ ພູມທະຈິດ ເລຂາພັກບ້ານນາຍບ້ານ ປະທານກອງທຶນບ້ານສາມັກຄີແນວລາວສ້າງຊາດ ໄດ້ລາຍງານໃຫ້ຮູ້ວ່າ: ກອງທຶນບ້ານສາມັກຄີແນວລາວສ້າງຊາດ ບ້ານດົງໜອງ ເມືອງສາລະວັນ ແຂວງສາລະວັນ ແມ່ນກອງທຶນໜຶ່ງທີ່ນອນໃນສອງກອງທຶນທົ່ວແຂວງສາລະວັນ ພາຍໃຕ້ການນຳພາ-ຊີ້ນຳຮອບດ້ານຂອງອົງຄະນະພັກແຂວງ, ປະທານແນວລາວສ້າງຊາດແຂວງ, ອົງຄະນະພັກເມືອງ ແລະ ຜູ້ສະໜອງທຶນໃຫ້ກູ້ຢືມຂອງທະນາຄານພົງສະຫວັນ ສາຂາແຂວງສາລະວັນ, ກອງທຶນສາມັກຄີແນວລາວສ້າງຊາດ ບ້ານດົງໜ້ອງ ສ້າງຕັ້ງຂຶ້ນໃນວັນທີ 2 ມິຖຸນາ 2021 ປະກອບມີຄະນະກອງທຶນ 3 ທ່ານ, ໃນປີ 2022 ຜ່ານມາ ມີທຶນສຳຮອງປ່ອຍກູ້ໃຫ້ປະຊາຊົນທັງໝົດ 3 ຕື້ກວ່າກີບ ມີສະມາຊິກກອງທຶນທັງໝົດ 112 ລາຍ ເຊິ່ງສະມາຊິກກອງທຶນໄດ້ກູ້ຢືມເຂົ້າໃນກິດຈະກຳລ້ຽງສັດ, ກິດຈະກຳປູກຝັງ, ກິດຈະກຳຊື້ດິນທຳການຜະລິດ, ກິດຈະກຳຄ້າຂາຍທົ່ວໄປ ແລະ ກິດຈະກຳຊື້ພາຫະນະລົດໄຖນາເພື່ອທຳການຜະລິດ, ສະມາຊິກກອງທຶນແມ່ນໃຫ້ການຮ່ວມມືເປັນຢ່າງດີ ສາມາດຊຳລະຕົ້ນທຶນ ແລະ ດອກເບ້ຍ ຄົບທັນຕາມກຳນົດເວລາ; ພ້ອມດຽວກັນກອງປະຊຸມກໍ່ໄດ້ຮັບຟັງການມີທິດຊີ້ນຳຈາກທ່ານປະທານ ສພຂ ສາລະວັນ ຕື່ມອີກ.

ໃນວັນດຽວກັນ, ທ່ານ ສີເຮັງ ຫອມສົມບັດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມເບິ່ງຄອບຄົວສະມາຊິກກອງທຶນສາມັກຄີແນວລາວສ້າງຊາດ ທີ່ກູ້ຢືມໄປທຳການປູກຝັງ ປູກໝາກແຕງ ເປັນສິນຄ້າປ້ອນຕະຫຼາດພາຍໃນແຂວງ ເຊິ່ງເປັນຄອບຄົວຕົວແບບ ສາມາດສ້າງລາຍຮັບເສດຖະກິດໃຫ້ແກ່ຄອບຄົວ ທັງເປັນການປະກອບສ່ວນເຂົ້າໃນວຽກງານວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາເສດຖະກິດ-ການເງິນ.

(ດີລຳພົນ ພົມມະຈັນ)

# ຄລສ ເຊກອງ ຕີລາຄາຄືນການຈັດຕັ້ງປະຕິບັດວຽກງານປະຈຳໄຕມາດທີ I

(ສພຊ) ໃນຕອນເຊົ້າວັນທີ 31 ມີນາ 2023 ທີ່ສະໂມສອນສະພາປະຊາຊົນແຂວງເຊກອງ ໄດ້ມີກອງປະຊຸມສະຫຼຸບຕີລາຄາຄືນການຈັດຕັ້ງປະຕິບັດວຽກງານປະຈຳໄຕມາດທີ I (1-2-3) ແລະ ວາງທິດທາງແຜນການ ປະຈຳໄຕມາດທີ II (4-5-6) ປີ 2023 ຂອງຄະນະເລຂາທິການສະພາປະຊາຊົນແຂວງ (ຄລສ) ເຊກອງ ໂດຍການເຂົ້າຮ່ວມເປັນປະທານຂອງທ່ານ ປອ. ແພງສີ ສີລາວີ ຮອງປະທານສະພາປະຊາຊົນແຂວງ ແລະ ທ່ານ ນາງ ຄຳໄພ ວິລະສານ ເລຂາທິການສະພາປະຊາຊົນແຂວງ, ມີບັນດາທ່ານ ຄລສ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານ-ລັດຖະກອນພາຍໃນ ສພຂ ເຂົ້າຮ່ວມ.



ໂອກາດດັ່ງກ່າວ, ທ່ານ ນາງ ຄຳໄພ ວິລະສານ ໄດ້ມີຄຳເຫັນກ່າວເປີດກອງປະຊຸມວ່າ: ເພື່ອເຮັດໃຫ້ກອງປະຊຸມບັນລຸຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້ ຂໍຮຽກຮ້ອງມາຍັງບັນດາທ່ານ ຈົ່ງຍົກສູງຄວາມຮັບຜິດຊອບນຳໃຊ້ຄວາມຮູ້, ຄວາມສາມາດຂອງຕົນ ເຂົ້າໃນການຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ບັນດາເນື້ອໃນກອງປະຊຸມຄັ້ງນີ້ ໃຫ້ແທດເໝາະກັບຄວາມເປັນຈິງ, ຍົກໃຫ້ເຫັນດ້ານດີ, ດ້ານອ່ອນ, ສາເຫດ ແລະ ສະເໜີວິທີການແກ້ໄຂຢ່າງຈະແຈ້ງ ເພື່ອເປັນບົດຮຽນໃຫ້ແກ່ການແກ້ໄຂວຽກງານໃນຕໍ່ໜ້າ.

ຈາກນັ້ນ, ຜູ້ແທນກອງປະຊຸມກໍໄດ້ຮັບຟັງການລາຍງານກ່ຽວກັບການເຄື່ອນໄຫວວຽກງານຂອງ ຄລສ ປະຈຳໄຕມາດທີ I (1-2-3) ແລະ ວາງທິດທາງແຜນການ ປະຈຳໄຕມາດ ທີ II (4-5-6) ປີ 2023 ແລະ ຮັບຟັງກ່ຽວກັບເນື້ອໃນເອກະສານທີ່ສຳຄັນຕ່າງໆ ເປັນຕົ້ນແມ່ນ ຂໍ້ຕົກລົງຂອງເລຂາທິການກ່ຽວກັບການແບ່ງງານແບ່ງຄວາມຮັບຜິດຊອບຄືນໃໝ່, ແຈ້ງການຂອງພະແນກພາຍໃນແຂວງ ກ່ຽວກັບການລາຍງານປະຈຳການຂອງລັດຖະກອນ, ແຈ້ງການຂອງຄະນະກຳມະການກອງທຶນໄພພິບັດຂັ້ນແຂວງ ແລະ ແຈ້ງການຂອງຫ້ອງວ່າການປົກຄອງແຂວງກ່ຽວກັບການສະເຫຼີມສະຫຼອງບຸນປີໃໝ່ລາວ ພ.ສ 2566 (ຄ.ສ 2023). ພ້ອມນັ້ນ, ບັນຜູ້ແທນກອງປະຊຸມກໍໄດ້ມີການສົນທະນາແລກປ່ຽນ, ປະກອບຄຳຄິດຄຳເຫັນຕໍ່ບົດສະຫຼຸບຂອງ ຄລສ ຢ່າງມີຈຸດສຸມ ເພື່ອເຮັດໃຫ້ເນື້ອໃນດັ່ງກ່າວມີຄວາມຄົບຖ້ວນສົມບູນຂຶ້ນຕື່ມ.

ໂອກາດດັ່ງກ່າວ, ທ່ານ ປອ. ແພງສີ ສີລາວີ ໄດ້ໂອ້ລົມຕໍ່ກອງປະຊຸມ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ ຄລສ ກໍຄືບັນດາເສນາທິການທີ່ໄດ້ພ້ອມກັນເອົາໃຈໃສ່ປະຕິບັດໜ້າທີ່ວຽກງານຢ່າງຕັ້ງໜ້າ ແລະ ມີຜົນສຳເລັດຫຼາຍດ້ານ. ສະນັ້ນ, ເພື່ອສືບຕໍ່ຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ມີຄວາມໜັກແໜ້ນເຂັ້ມແຂງຂຶ້ນຕື່ມ ໃຫ້ເອົາໃຈໃສ່ໃນການເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານພາຍໃນສະພາປະຊາຊົນແຂວງ ໂດຍຕິດພັນກັບການກວດກາການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງແຕ່ລະຄະນະກຳມະການ, ຂະແໜງການ ໃນການປະຕິບັດແບບແຜນວິທີເຮັດວຽກ ພ້ອມທັງຍົກສູງທາງດ້ານກົນໄກການປະສານງານລະຫວ່າງ ຄລສ ກັບຄະນະກຳມະການ ພາຍໃນ ສພຂ ແລະ ອົງການທີ່ກ່ຽວຂ້ອງ ໃຫ້ມີຄວາມກົມກຽວ ແລະ ທ່ວງທັນກັບສະພາບການເຄື່ອນໄຫວວຽກງານຕົວຈິງ.

(ນາງ ນາລີວັນ)



# ກົດໝາຍວ່າດ້ວຍ ການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ)

ຕໍ່ຈາກສະບັບກ່ອນ...

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ**

ລັດ ຄຸ້ມຄອງເງິນຕາຕ່າງປະເທດດ້ວຍກົດໝາຍ, ການວາງນະໂຍບາຍ ແລະ ລະບຽບການເພື່ອດັດສົມການນຳໃຊ້ເງິນຕາຕ່າງປະເທດຂອງສັງຄົມ ໃຫ້ມີການປະຢັດ, ເກີດປະໂຫຍດສູງສຸດ ແລະ ການສະສົມເງິນຕາຕ່າງປະເທດ ໃຫ້ເພີ່ມຂຶ້ນ.

ລັດ ຊຸກຍູ້ ປຸກລະດົມ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທຸກພາກສ່ວນ ເຂົ້າຮ່ວມໃນຄຸ້ມຄອງເງິນຕາຕ່າງປະເທດ ໂດຍການນຳໃຊ້ເງິນຕາຕ່າງປະເທດໃຫ້ສອດຄ່ອງຕາມກົດໝາຍ.

ລັດ ເອົາໃຈໃສ່ໂຄສະນາ ເຜີຍແຜ່, ສຶກສາອົບຮົມ, ສະໜອງຂໍ້ມູນ ຂ່າວສານ ໃຫ້ທົ່ວປວງຊົນ ຮູ້ ແລະ ເຂົ້າໃຈກ່ຽວກັບຫຼັກການໃນການຄອບຄອງ ແລະ ນຳໃຊ້ເງິນຕາຕ່າງປະເທດ ໃຫ້ຖືກຕ້ອງຕາມກົດໝາຍ.

ລັດ ສົ່ງເສີມການຄຸ້ມຄອງເງິນຕາຕ່າງປະເທດ ດ້ວຍການສ້າງເງື່ອນໄຂສະດວກ, ປະກອບບຸກຄະລາກອນ, ສະໜອງງົບປະມານ ແລະ ວັດຖຸປະກອນ ໃຫ້ແກ່ອົງການຄຸ້ມຄອງວຽກງານເງິນຕາຕ່າງປະເທດ.

**ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ**

ການຄຸ້ມຄອງເງິນຕາຕ່າງປະເທດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ, ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃນແຕ່ລະໄລຍະ;

2. ລວມສູນ ເປັນເອກະພາບ ແລະ ມີການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນຂອບເຂດທົ່ວປະເທດ;

3. ມີວິທະຍາສາດ, ເດັດຂາດ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;

4. ຮັບປະກັນຄວາມເປັນເອກະລາດ ແລະ ສະຖຽນລະພາບທາງດ້ານເງິນຕາ;

5. ທຸກພາກສ່ວນໃນສັງຄົມ ມີພັນທະປະກອບສ່ວນໃນການຈັດຕັ້ງປະຕິບັດ ໃຫ້ການຮ່ວມມື ແລະ ມີສ່ວນຮ່ວມໃນການຄຸ້ມຄອງເງິນຕາຕ່າງປະເທດ.

**ມາດຕາ 6 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີ ແລະ ບໍ່ມີ ພູມລຳເນົາ ຢູ່ ສປປລາວ ທີ່ເຄື່ອນໄຫວທຸລະກຳກ່ຽວກັບເງິນຕາຕ່າງປະເທດ.

**ມາດຕາ 7 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມ, ເປີດກວ້າງການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄຸ້ມຄອງເງິນຕາຕ່າງປະເທດ ດ້ວຍການແລກປ່ຽນຂໍ້ມູນ ຂ່າວສານ, ບົດຮຽນ, ປະສົບການ, ເຕັກນິກວິຊາການ, ເຕັກໂນໂລຊີ, ການພັດທະນາຊັບພະຍາກອນມະນຸດ ແລະ ປະຕິບັດຕາມສົນທິສັນຍາ ທີ່ ສປປລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

**ພາກທີ II**
**ການຄອບຄອງ ແລະ ການນຳໃຊ້ ເງິນຕາຕ່າງປະເທດ ຢູ່ ສປປລາວ**

**ມາດຕາ 8 (ປັບປຸງ) ການຄອບຄອງເງິນຕາຕ່າງປະເທດ ຢູ່ ສປປລາວ**

ຜູ້ມີ ແລະ ບໍ່ມີ ພູມລຳເນົາ ຢູ່ ສປປລາວ ສາມາດຄອບຄອງເງິນຕາຕ່າງປະເທດ ທີ່ໄດ້ມາຢ່າງຖືກຕ້ອງຕາມກົດໝາຍ ດ້ວຍການເປີດບັນຊີເງິນຝາກໄວ້ນຳທະນາຄານທຸລະກິດ ຢູ່ ສປປລາວ ແລະ/ຫຼື ຖືຄອງເປັນເງິນສົດ ຕາມລະບຽບການ.

ລາຍຮັບງົບປະມານແຫ່ງລັດ ທີ່ເປັນເງິນຕາຕ່າງປະເທດ ແລະ ເຄື່ອນໄຫວຜ່ານກະຊວງການເງິນໃຫ້ຝາກໄວ້ນຳທະນາຄານແຫ່ງ ສປປລາວ.

ທະນາຄານແຫ່ງ ສປປລາວ ເປັນຜູ້ກຳນົດ ຫຼັກການ, ລະບຽບການ ກ່ຽວກັບການເປີດບັນຊີເງິນຝາກຂອງຜູ້ມີ ແລະ ບໍ່ມີ ພູມລຳເນົາ ຢູ່ ສປປລາວ.

**ມາດຕາ 9 (ປັບປຸງ) ການນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປລາວ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຄອບຄອງເງິນຕາຕ່າງປະເທດ ກ່ອນຈະນຳໃຊ້ເຂົ້າໃນການຮັບຊຳລະ ແລະ ຊຳລະຄ່າ ສິນຄ້າ, ບໍລິການ, ໜີ້ສິນ, ເງິນປັນຜົນ, ເບີກຈ່າຍເງິນເດືອນ ຫຼື ຄ່າແຮງງານ ແລະ ປະຕິບັດພັນທະຕໍ່ລັດ ໃນ ສປປລາວ ຕ້ອງແລກປ່ຽນເປັນເງິນກີບ ຊຶ່ງການແລກປ່ຽນດັ່ງກ່າວ ຕ້ອງດຳເນີນຢູ່ທະນາຄານທຸລະກິດເທົ່ານັ້ນ.

ສຳລັບລາຍຮັບງົບປະມານແຫ່ງລັດ ທີ່ເປັນເງິນຕາຕ່າງປະເທດ ເມື່ອຕ້ອງການນຳໃຊ້ຢູ່ພາຍໃນປະເທດ ຕ້ອງຂາຍເງິນຕາຕ່າງປະເທດໃຫ້ທະນາຄານແຫ່ງ ສປປລາວ ຕາມອັດຕາແລກປ່ຽນຂອງທະນາຄານແຫ່ງ ສປປລາວ ທີ່ປະກາດໃຊ້ໃນແຕ່ລະວັນ.

ການກຳນົດມູນຄ່າ, ການຕິດປະກາດ ແລະ ໂຄສະນາລາຄາສິນຄ້າ, ຄ່າບໍລິການ, ເງິນເດືອນ ຫຼື ຄ່າແຮງງານ ແລະ ອື່ນໆ ໃນ ສປປລາວ ຕ້ອງເປັນເງິນກີບ. ທຸກການກຳນົດໂຄງສ້າງລາຄາສິນຄ້າ ແລະ ການບໍລິການ ໃຫ້ຖືເອົາສະກຸນເງິນກີບ ເປັນພື້ນຖານໃນການຄິດໄລ່ໂຄງປະກອບລາຄາດັ່ງກ່າວ.

ທະນາຄານແຫ່ງ ສປປລາວ ເປັນຜູ້ຄົ້ນຄວ້າ ແລະ ນຳສະເໜີຕໍ່ລັດຖະບານ ເພື່ອກຳນົດເປົ້າໝາຍສະເພາະ ທີ່ສາມາດນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປລາວ ເປັນຕົ້ນ ເຂດເສດຖະກິດພິເສດ, ເຂດການຄ້າຊາຍແດນ, ຮ້ານຄ້າປອດພາສີ ລວມທັງການປະຕິບັດພັນທະຕໍ່ລັດຂອງຫົວໜ່ວຍວິສາຫະກິດທີ່ມີລາຍຮັບເປັນເງິນຕາຕ່າງປະເທດ.

ການນຳໃຊ້ເງິນຕາຕ່າງປະເທດ ສຳລັບເປົ້າໝາຍສະເພາະ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ພາກທີ III**
**ການຊຳລະກັບຕ່າງປະເທດ**

**ມາດຕາ 10 (ໃໝ່) ການຊຳລະກັບຕ່າງປະເທດ**

ການຊຳລະກັບຕ່າງປະເທດ ແມ່ນ ການເຄື່ອນໄຫວທຸລະກຳທາງດ້ານເງິນຕາ ທີ່ຕິດພັນກັບການຄ້າ ແລະ ການບໍລິການກັບຕ່າງປະເທດ, ລາຍຮັບ ແລະ ເງິນຊ່ວຍເຫຼືອລ້າ, ການລົງທຶນໂດຍກົງ, ການລົງທຶນໃນຫຼັກຊັບ, ການກູ້ຢືມ, ການຝາກເງິນລະຫວ່າງປະເທດ ແລະ ການນຳເງິນສົດເຂົ້າ-ອອກ ສປປລາວ.

ຜູ້ມີ ແລະ ບໍ່ມີ ພູມລຳເນົາ ຢູ່ ສປປລາວ ສາມາດນຳໃຊ້ເງິນຕາຕ່າງປະເທດ ເພື່ອເປົ້າໝາຍດຳເນີນທຸລະກຳ ຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງຂອງມາດຕານີ້ ດ້ວຍການຊຳລະຜ່ານລະບົບທະນາຄານ ຫຼື ຜູ້ໃຫ້ບໍລິການຊຳລະລະຫວ່າງປະເທດ.

**ໝວດທີ 1**
**ການຄ້າ ແລະ ການບໍລິການ ກັບຕ່າງປະເທດ**

**ມາດຕາ 11 (ໃໝ່) ການຄ້າ ແລະ ການບໍລິການ ກັບຕ່າງປະເທດ**

ການຄ້າ ແລະ ການບໍລິການ ກັບຕ່າງປະເທດ ແມ່ນການນຳເຂົ້າ-ສົ່ງອອກ ສິນຄ້າ ແລະ/ຫຼື ການບໍລິການຂອງ ຜູ້ມີ ແລະ ບໍ່ມີ ພູມລຳເນົາ ຢູ່ ສປປລາວ ທີ່ພາໃຫ້ມີທຸລະກຳການຊຳລະເງິນຕາ.

ອ່ານຕໍ່ສະບັບໜ້າ...




## ວິທີເຮັດວຽກ

ພາກທີ 3
ພະຍາດເປັນແຕ່ປາກ (ຕໍ່)

ຕໍ່ຈາກສະບັບກ່ອນ...

ແມ່ນອັນໃດແທ້ທີ່ເພິ່ນເອີ້ນວ່າບັນຫາ? ເມື່ອວຽກການອັນໃດຫາກມີບ່ອນຂັດແຍ່ງກັນ, ຈຳເປັນຕ້ອງຊອກວິທີແກ້ໄຂ ນັ້ນແຫຼະທີ່ເພິ່ນເອີ້ນວ່າ: "ບັນຫາ". ເມື່ອໃດຫາກມີບັນຫາເກີດຂຶ້ນ ພວກເຮົາກໍຕ້ອງຄົ້ນຄວ້າໃຫ້ຄັກວ່າ ແມ່ນອັນໃດເປັນກົກເຄົ້າຂອງຂໍ້ຂັດແຍ່ງນັ້ນ ຕ້ອງສືບສວນເບິ່ງ ຄົ້ນຄວ້າເບິ່ງຂໍ້ຂັດແຍ່ງນັ້ນ ຕ້ອງຈຳແນກອອກຢ່າງຈະແຈ້ງ ແລະ ມີສາຍໄຍຈັດຕັ້ງ ຕ້ອງໃຫ້ຮູ້ວ່າອັນໃດແມ່ນຂໍ້ຂັດແຍ່ງຕົ້ນຕໍ ອັນໃດແມ່ນຂໍ້ຂັດແຍ່ງສຳຮອງ ແລ້ວຕ້ອງວາງວິທີແກ້ໄຂໂລດ.

ເມື່ອພວກເຮົາເຫັນບັນຫາໃດ ກໍຕ້ອງຈັດມັນອອກເປັນ 3 ກ້າວຄື ກ້າວທີໜຶ່ງ ແມ່ນວາງມັນອອກເປັນຮູບບັນຫາ, ກ້າວທີສອງແມ່ນຈຳແນກມັນຄື :(ສືບເບິ່ງ, ຄົ້ນຄວ້າ ແລະ ສັບຊ້ອນ, ແລ້ວແກ້ໄຂມັນ).

ເວລາຂຽນບົດຄວາມອັນໜຶ່ງ ຫຼື ເວລາກ່າວສູນທອນພົດອັນໜຶ່ງ ກໍຕ້ອງເຮັດແນວດຽວກັນນັ້ນ, ເພື່ອບໍ່ໃຫ້ເປັນອັນຫວ່າງເປົ່າແລະ ແຫ້ງແລ້ງ.

ຈ) ມັກງ່າຍຜິວເຜີນ:

ສິ່ງທີ່ບໍ່ດີດັ່ງເວົ້າມາເທິງນີ້, ສ່ວນໜຶ່ງແມ່ນເປັນຍ້ອນຂາດບົດຮຽນ, ແຕ່ສ່ວນໜຶ່ງກໍແມ່ນເປັນຍ້ອນຄວາມມັກງ່າຍເຮັດພຽງຜິວເຜີນ ເພື່ອໃຫ້ມັນແຈ້ງ ພວກເຮົາຂໍຍົກຕົວຢ່າງດັ່ງລຸ່ມນີ້ມາປຽບທຽບຄືວ່າ: ແຕ່ລະມື້ ພວກເຮົາຜູ້ໃດລ້າງໜ້າໝົດທຸກຄົນ, ບາງຄົນຫວີຜົມແລ້ວຍັງແຍງແວ່ນອີກ ວ່າມັນສະອາດດີແລ້ວບໍ່? ຖ້າວ່າພວກເຮົາຂຽນບົດຄວາມ, ກ່າວສູນທອນພົດ ຫາກເຮັດດີຄືແນວນັ້ນ. ກໍຄົງຈະບໍ່ມີຂໍ້ບົກພ່ອງຫຼາຍ, ເລື່ອງສຳຄັນແມ່ນ: ບໍ່ຮູ້ຄັກບໍ່ເຂົ້າໃຈຄັກ, ຢ່າສູ່ເວົ້າຢ່າສູ່ຂຽນ, ເມື່ອບໍ່ມີຄວາມຈຳເປັນຈະຕ້ອງເວົ້າ ບໍ່ມີຄວາມຈຳເປັນຈະຕ້ອງຂຽນ ກໍຢ່າເວົ້າຢ່າຂຽນ ເມື່ອຂຽນໜັງສືພິມບົດໜຶ່ງແລ້ວໆ ຂຽນລາຍງານອັນໜຶ່ງແລ້ວໆ ຫຼືຂຽນບົດສູນທອນພົດບົດໜຶ່ງແລ້ວໆ ກໍຕ້ອງອ່ານຄືນສອງສາມເທື່ອ, ຕົນເອງຕ້ອງຕຳໜິບົດຂອງຕົນ ແລ້ວເອົາໄປຖາມຄຳເຫັນເພື່ອນສະຫາຍຂອງຕົນ. ເມື່ອເຫັນຄວາມເຫຼືອ ຕົວໜັງສືຕົວໃດເຫຼືອ ກໍຕ້ອງຂີດຂ້າຖິ້ມ.

ເຮົາລ້າງໜ້າ ກໍຍັງລູບໄປລູບມາເຖິງສອງສາມເທື່ອ ຈິ່ງສະອາດ, ເຮົາຂຽນບົດຄວາມ ແລະ ກ່າວສູນທອນພົດ ກໍຕ້ອງເຮັດຄືດຽວກັນນັ້ນ.

ອ່ານຕໍ່ສະບັບໜ້າ...




# ສັດທາອິປະລິດ ກໍ່ໃຫ້ເກີດວິກິດ

# ດົ້ນກົບເມກ

ຖ້າຄົນໃນສັງຄົມເສຍຫຼັກດ້ານສັດທາ ກໍຈະເຮັດໃຫ້ຊີວິດຫຼົງໄປຍຶດຕິດອຳນາດລຶດເດດດົນບັນດານ ແທນການປະຕິບັດສິນທຳ; ຜູ້ເຮັດໜ້າທີ່ສອນ ລະເລີຍບົດບາດຕົນເອງຊີ້ນຳຫຼັກທຳແກ່ສັງຄົມ; ຫຼັກພຸດທະສາສະໜາ ຕ້ອງການພັດທະນາຄົນໃຫ້ຈະເລີນໃນສິນ; ສະມາທິ ແລະ ປັນຍາ, ແຕ່ຖ້າຂາດຜູ້ສອນ, ຜູ້ຊີ້ນຳທາງຢ່າງບໍ່ຖືກຕ້ອງ ສັງຄົມກໍຈະເສຍຫຼັກ ເຊິ່ງບາງທີຜູ້ສອນບໍ່ຮູ້ຫຼັກການ ແຕ່ຫຼົງໄປສອນຊີ້ນຳໃຫ້ເກີດແຕ່ສັດທາໂຕດຽວກໍມີ ພາໃຫ້ຂາດປັນຍາ.

ຫຼັກການຄວາມເຊື່ອຂອງພຸດຄື ຫຼັກແຫ່ງກຳ-ເຮັດດີໄດ້ດີ-ເຮັດຊົ່ວໄດ້ຊົ່ວ ບໍ່ສອນໃຫ້ຫຼົງໃນຄວາມສັກສິດວ່າ: ເກີດຈາກລິດເດດດົນບັນດານຈາກເທບພະເຈົ້າ; ສິ່ງສັກສິດທີ່ຕາເບິ່ງບໍ່ເຫັນ; ພຸດທະສາສະໜາສອນວ່າ: ສິ່ງສັກສິດສູງສຸດຄື: ສິນ-ສະມາທິ ແລະ ປັນຍາທີ່ນຳພາຊີວິດກ້າວສູ່ຄວາມຈະເລີນ; ຮູ້ຈັກຜິດ-ຖືກ.

ທັດສະນະຂອງພຸດທະສາສະໜາ ຕໍ່ເລື່ອງໄສຍະສາດ, ສິ່ງສັກສິດເຄົາລົບບູຊາໃຫ້ເປັນພຽງສິ່ງບຳລຸງຂວັນກຳລັງໃຈໃຫ້ເກີດມີກຳລັງໃຈຕໍ່ສູ້ກັບບັນຫາດ້ວຍສະຕິປັນຍາ ບໍ່ແມ່ນໃຫ້ຫຼົງໄຫຼລໍຄອຍໂຊກບັນດານ. ດັ່ງນັ້ນ, ຫຼັກພຸດຈຶ່ງບໍ່ສອນໃຫ້ລໍໂຊກວາດສະໜາ ແຕ່ສອນເນັ້ນໃຫ້ລົງມືປະຕິບັດ, ສອນໃຫ້ປະພຶດດີ, ໃຫ້ເຊື່ອຜົນຂອງກຳດີແລ້ວຈະໄດ້ຜົນດີຕອບແທນ ບັນດາຜູ້ນັບຖືສາສະໜາ (ອຸບາສົກ-ອຸບາສິກາ) ພຽງແຕ່ມີສັດທາຫຼາຍຄັ້ງກໍຫຼົງຜິດເພາະຂາດປັນຍາ, ສ່ວນພະສົງບາງອົງ ກໍຍຶດຕິດໃນວັດຖຸຈົນຫຼົງຂາດສະຕິປັນຍາທີ່ຈະສອນຊາວບ້ານ; ບໍລິໂພກປັດໄຈເກີນຄວາມຈຳເປັນລະເລີຍທີ່ຈະສອນຊາວບ້ານ ກໍໃຫ້ເກີດຄວາມສັບສົນໃນສັດທາເພາະຂາດປັນຍາເປັນໂຕນຳ.

ສັງລວມແລ້ວ: ຊາວພຸດ ບໍ່ພຽງມີສັດທາຢ່າງດຽວແຕ່ຕ້ອງມີປັນຍາຄູ່ກັນ; ໂຕປັນຍາຄືໂຕຮູ້ວ່າອັນໃດຖືກ-ຜິດຫຼືອັນໃດບໍ່ຖືກຕ້ອງເໝາະສົມກໍສາມາດອະທິບາຍໄດ້, ຕ້ອງເປີດໃຈຮັບຟັງຄົນອ້ອມຂ້າງໃຫ້ໄດ້.

ສະເໜີແລກປ່ຽນ.

# ການຄຳນວນ ທຳນາຍປະຈຳປີ ພສ 2566

# ໂດຍ: ວັດປ່າ



ປີໃໝ່ລາວທຸກໆປີ ຈະມີບັນດານັກປາດ ຫຼື ອາຈານ ແລະ ຄະລືຫັດ ຜູ້ມີຄວາມຮອບຮູ້ທາງດ້ານວິຊາໂຫລາສາດ ຄຳນວນເກນຕ່າງໆຕາມຫຼັກເກນ ເປັນຕົ້ນແມ່ນຄຳນວນກ່ຽວກັບດິນຟ້າອາກາດ, ພືດພັນທັນຍາຫານ ວ່າໃນປີໃໝ່ຈະໄດ້ຮັບໝາກຜົນດີຫຼືບໍ່ ເຊິ່ງໃນບົດນີ້ ຈະນຳສະເໜີການຄຳນວນປະຕິທິນລາວ ສຳລັບປີ ພສ 2566 ແລະ ການຄຳນວນຕາມໂຫລາສາດ ປີໃໝ່ລາວປີນີ້ ໄດ້ມີການສະຫຼອງກັນໃນວັນທີ 14-16 ເມສາ 2023 ເປັນເວລາ 3 ວັນ ຄື:

ວັນທີ 14 ເມສາ ເປັນວັນສັງຂານລ່ວງ ກົງກັບວັນສຸກ ແຮມ 9 ຄ່ຳ ເດືອນ 5 ພສ 2566 ເວລາ 16 ໂມງ 4 ນາທີ 48 ວິນາທີ; ວັນທີ 15 ເມສາ ກົງກັບວັນເສົາ ແຮມ 10 ຄ່ຳ ເດືອນ 5 ເປັນວັນສັງຂານເນົາ ແລະ ວັນທີ 16 ເມສາ ກົງກັບວັນອາທິດ ແຮມ 11 ຄ່ຳ ເດືອນ 5 ພສ 2566 ເປັນວັນສັງຂານຂຶ້ນ ເຊິ່ງໃນມື້ດັ່ງກ່າວນີ້ ເວລາ 20 ໂມງ 2 ນາທີ 24 ວິນາທີ ຈະເປັນມື້ຖະເຫຼີງສົກປີໃໝ່ລາວ ແລະ ປ່ຽນຈຸລະສັກລາດ ຈສ 1385.

ນາງ ສັງຂານ: ປີເຖາະ-ກ່າເຫຼົ້າ-ປັນຈະສົກ, ທາງຈັນທະລະຄະຕິ ເປັນປີອະທິກະມາດ, ປີກະຕິວານ, ປີກະຕິສຸຣະທິນ, ທາງສຸລິຍະຄະຕິ ເປັນປີປົກກະຕິສຸລະທິນ 365 ເໝືອນກັນ ເຊິ່ງປີນີ້ ເປັນຜຽນຂອງທິດາອົງທີ 6 ຂອງພະຍາກະບິນລະພົມ ມີຊື່ວ່າ ນາງ ກິມິທາເທວີ ທັດດອກບົວລອຍອາພອນປະດັບໄປດ້ວຍແກ້ວບຸດສະລາຄຳ (ແກ້ວສີເຫຼືອງ), ສະເຫວີຍກ້ວຍນ້ຳ, ມືຂວາຖືພະຂັນ (ງ້າວ-ດາບ), ມືຊ້າຍຖືພິນ (ສີຊໍ), ພາຫະນະແມ່ນມະຫິງສາ (ຄວາຍ).

ຕາມເກນຄຳນວນ ໃນປີນີ້ ແມ່ນເກນພິຣຸນະສາດ: ພະຈັນເປັນອະທິບໍດີ, ນາກຫຼິ້ນນ້ຳ 2 ໂຕ, ບັນດານໃຫ້ຝົນຕົກ 500 ຫ່າ, ຕົກໃນຈັກກະວານ 200 ຫ່າ, ຕົກໃນປ່າຫິມະພານ 150 ຫ່າ, ຕົກໃນມະຫາສະມຸດ 100 ຫ່າ, ຕົກໃນໂລກມະນຸດ 50 ຫ່າ; ເກນທາຮາທິຄຸນ: ຕົກຮາສີ ປະຖະພີທາດ, ນ້ຳຈະຫຼາຍ, ຝົນຈະງາມຕະຫຼອດປີ, ນາລຸ່ມ ແລະ ນາດອນຈະດີ ທຸກໆແຫ່ງ, ຈະມີລົມພັດບາງຄັ້ງຄາວມາຈາກ 4 ທິດຕາມລະດູການ; ເກນທັນຍາຫານປີນີ້ຊື່ວ່າ ມັດຊິມະ, ເຂົ້າກ້າໄຮ່ນາຈະໄດ້ແຕ່ 1 ສ່ວນ ເສຍໄປ 5 ສ່ວນ, ໂພຊະນີຍາຫານເປັນຜໍຄວນ, ປະຊາຊົນທັງຫຼາຍໄດ້ທັງທຸກ ແລະ ສຸກສະເໝີກັນ; ເກນຜະລາມັງສາຫານ ຜົນໝາກໄມ້ຈະດົກ, ເຂົ້າປາຈະແພງ, ຊີ້ນປາອາຫານ ຈະມີພໍຄວນ; ເກນຣຸກຂະຊາດ ໄມ້ສັກ ເປັນພະຍາ, ບ້ານເມືອງບໍ່ຄ່ອຍຊຸ່ມເຢັນ, ລາງແຫ່ງກໍດີ, ລາງແຫ່ງກໍບໍ່ດີແລ; ເກນກາລະໂຍກ ວັນເສົາເປັນທຸງໄຊ, ວັນພຸດເປັນອະທິບໍດີ, ວັນອັງຄານເປັນອຸບາດ, ວັນສຸກເປັນໂລກາວິນາດ.



# ຂຽນຄຳລາວໃຫ້ຖືກ

#ຄູແສງ

| ຄຳຖືກ | ຄຳຜິດ |
|---|---|
| ຫຍ່ຽງຫົວ | ງ່ຽງຫົວ |
| ງ່ຽງປາ | ຫງ່ຽງປາ |
| ປາຖະກະຖາ | ປະຖະກາຖາ |
| ປະຖະພີ | ປາຖະພີ |
| ຜົນປະໂຫຍດ | ຜົນປະໂຍດ |
| ຫຼາຍສິບໂຍດ | ຫຼາຍສິບໂຫຍດ |
| ໂລງສົບ | ໂຮງສົບ |
| ໂຮງກຶງ | ໂລງກຶງ |




# ຈອດ

**ຈອດ:** ຄຳວ່າ "ຈອດ" ໃນພາສາລາວ ຍ່ອມມີຫລາຍລັກສະນະ ມີທັງຄຳກິລິຍາ ແລະ ຄຳນາມ ເຊັ່ນ: "ຈອດ" ແມ່ນຊື່ຫວ້ານແນວໜຶ່ງ ມີຫົວຄືຂະໝິ້ນ ແຕ່ຫວ້ານຈອດນີ້ ມີຫລາຍຊະນິດ ເວລາກີກເປັນບາດ ເພີ່ນຈະນຳເອົາມາທັບໃພະໃສ່ ແລ້ວບາດກໍຈະດີໄວ ແລະ ເອີ້ນວ່າ "ຫວ້ານຈອດ". ຈອດອີກແບບໜຶ່ງ ແມ່ນການໄປຮອດໄປເຖິງ ເຊັ່ນ: ຄຳວ່າ ໄປຮອດ. ໄປຈອດ ຫຼື ໄປເຖິງ ເມື່ອຄົນພາຍເຮືອ ຫຼື ຂີ່ເຮືອເຂົ້າຮອດຝັ່ງ ເພີ່ນກໍເວົ້າວ່າ ເອົາເຮືອເຂົ້າຈອດຝັ່ງ ຫຼື ເຮືອເຂົ້າຮອດຝັ່ງ

ມີຈອດອີກແນວໜຶ່ງ ຄືເວົ້າບໍ່ເຊົາ ເຊັ່ນ: ເດັກນ້ອຍເວົ້າຈອດໆໝາຍເຖິງເວົ້າບໍ່ເຊົາ. ສຽງກ່ແມ່ໄຂ່ ຮ້ອງດັງຈອດໆ ເມື່ອມັນຢາກໄຂ່ອອກ. ຍັງມີຈອດອີກແນວໜຶ່ງ ແມ່ນການຈອດເຫຼັກ ຫຼື ໂລຫະຕ່າງໆໃຫ້ຕິດເຂົ້າກັນ ເພີ່ນເອີ້ນວ່າ ວ່າງຈອດ ຈອດ ເປັນພາສາລາວທີ່ໃຊ້ມາດົນນານ.



## ສຸກສະບາຍຫາຍໂຣຄ

# ພູມແພ້ອາກາດ

**ແປ ແລະ ຮຽບຮຽງໂດຍ: ບົງເອີນ**



ອາການພູມແພ້ອາກາດ ຫຼື ໂຣກພູມແພ້ອາກາດ (Allergic Rhinitis) ເປັນອາການທີ່ລົບກວນການໃຊ້ຊີວິດປະຈຳວັນຂອງຫຼາຍໆທ່ານ ເພາະຈະມີອາການຈາມ, ຕັນດັງ ແລະ ຄັນຕາມຜິວໜັງ ເຊິ່ງເກີດຈາກໂຕກະຕຸ້ນໃນຮ່າງກາຍຕອບສະໜອງຕໍ່ສານທີ່ຮ່າງກາຍຮັບເຂົ້າມາເຊັ່ນ: ຝຸ່ນລະອອງ, ຂົນສັດ, ລະອອງຂອງພືດ.... ເຊິ່ງອາການຂອງແຕ່ລະຄົນນັ້ນຈະມີປະຕິກິລິຍາທີ່ແຕກຕ່າງກັນໄປ ບາງທ່ານຫາຍໃຈຝືດ, ຕັນດັງ, ຄັນຕາ, ອອກຕຸ່ມ ຫຼື ບາງທ່ານອາດຈະຮຸນແຮງ ເກີດມີອາການຕ່ອມໃຕ້ຜິວໜັງໄຄ່ກະທັນຫັນ ເຊິ່ງອາດເຖິງແກ່ຊີວິດໄດ້. ດັ່ງນັ້ນ, ໃນຄໍລຳສຸກສະບາຍຫາຍໂລຄາສະບັບນີ້ ເຮົາມາຮູ້ຈັກກັບໂຣກພູມແພ້ອາກາດ ແລະ ວິທີການປ້ອງກັນ ເພື່ອບໍ່ໃຫ້ມັນກັບມາເປັນອີກ.

ອາການໂຣກພູມແພ້ອາກາດຂອງແຕ່ລະຄົນນັ້ນ ອາດຈະແຕກຕ່າງກັນ ແຕ່ມີອາການທີ່ຄ້າຍຄືກັນຢ່າງໃດຢ່າງໜຶ່ງ ຫຼື ເກີດພ້ອມກັນຫຼາຍຢ່າງ ດັ່ງນີ້:

- ດັງອັກເສບ, ຕັນດັງ, ຄັນດັງ-ຈາມ, ນ້ຳມູກໄຫຼລົງຄໍ ໃນຊ່ວງຜັດປ່ຽນລະດູ ໂດຍສະເພາະໃນໄລຍະທີ່ມີຝຸ່ນລະອອງໃນອາກາດຫຼາຍ ຫຼື ບາງທ່ານເປັນຕະຫຼອດປີ;
- ຜື່ນແພ້ທາງກຳມະພັນ ເຊິ່ງພົບຫຼາຍທີ່ສຸດໃນເດັກນ້ອຍ ຈະມີອາການຄັນບໍລິເວນແຂນພັບ ແລະ ຂາພັບ;
- ຜື່ນລົມເປັນພິດ ຜິວໜັງມີລັກສະນະເປັນຕຸ່ມນູນແດງ ແລະ ໜາຂຶ້ນ;
- ເຫຍື່ອຫຸ້ມຕາອັກເສບ ຈະມີອາການຄັນບໍລິເວນດວງຕາ, ມີນ້ຳຕາໄຫຼ ຫຼື ຕາບວມ;
- ຫາຍໃຈບໍ່ອອກກະທັນຫັນ, ໜ້າແດງ, ດັງບວມແດງ ແລະ ຫາກມີອາການວິນຫົວປວດຮາກ ອາດຈະນຳໄປສູ່ອາການຄວາມດັນຫຼຸດແລະເປັນອັນຕະລາຍເຖິງແກ່ຊີວິດໄດ້.

ການໃຊ້ຊີວິດຮ່ວມກັບຜູ້ທີ່ເປັນພູມແພ້ ຕ້ອງເຂົ້າໃຈພື້ນຖານຂອງການແພ້ ແລະ ກຳຈັດສິ່ງທີ່ກໍ່ໃຫ້ເກີດພູມແພ້ອອກຈາກສະພາບແວດລ້ອມທີ່ຢູ່ອາໄສ ຫຼີກລ່ຽງການສຳຜັດກັບສິ່ງກະຕຸ້ນເຊັ່ນ: ລະອອງເກສອນ, ບໍລິເວນຮ້ອນ-ເຢັນທີ່ມີການປ່ຽນແປງຢ່າງໄວວາ; ເບິ່ງແຍງດູແລຕົນເອງຢ່າງເໝາະສົມເພື່ອຊ່ວຍໃຫ້ຄົນທີ່ມີອາການພູມແພ້ອາກາດຢູ່ຮ່ວມກັນໃນສະພາບແວດລ້ອມດຽວກັນກັບຄົນອື່ນໄດ້ ແລະ ສຳລັບຜູ້ທີ່ມີອາການພູມແພ້ອາກາດ ມີວິທີປ້ອງກັນບໍ່ໃຫ້ອາການເກີດຂຶ້ນ ດັ່ງນີ້:

- ໃສ່ຜ້າປິດປາກແບບໃຊ້ເທື່ອດຽວ ຫຼື ແບບອື່ນໆເວລາທີ່ຈະອອກໄປນອກ ເພື່ອຫຼຸດການສູດດົມເອົາລະອອງເກສອນ, ຝຸ່ນ ແລະ ຂົນສັດ;
- ຫຼີກລ່ຽງການສຳຜັດສັດທີ່ບໍ່ຮູ້ແຫຼ່ງທີ່ມາ ຫຼື ສັດລ້ຽງຂອງຄົນອື່ນ;
- ລ້າງມືດ້ວຍສະບູ ຫຼື ເຈວລ້າງມື;
- ອະນາໄມເຮືອນ ຫຼື ສິ່ງຂອງຕ່າງໆທີ່ໃຊ້ເປັນປະຈຳ ເຊັ່ນ: ຜ້າຫົ່ມ, ຜ້າພົມ...

**www.thairath.co.th**




## ປີໃໝ່ຂໍໃຫ້ໂຊກດີ

**# ໂດຍ: ດາວເປັ່ງແສງ**

| | |
|---|---|
| ❈ ປີເກົ່າຫຍັບຍ່າງຍ້າຍ | ປີໃໝ່ວຽນມາ |
| ຂໍໃຫ້ພັກ-ລັດ-ປວງປະຊາ | ຢູ່ຍືນຍາວໝັ້ນ |
| ກິດຈະການງານກ້າວ | ຈະເລີນສີໃສສ່ອງ |
| ຊັບສິນຂອງເຄື່ອງໃຊ້ | ທະວີຂຶ້ນລື່ນຫຼັງ |
| ❈ ຫາຍຈາກຄວາມເດືອດຮ້ອນ | ນອນນັ່ງສຸກສົມ |
| ແສນສະບາຍອາລົມ | ທຸກຢ່າວົນວຽນໃກ້ |
| ໃຫ້ຄົນນິຍົມຍ້ອງ | ແຍງຍໍຮັກຫໍ່ |
| ສຸກຊື່ນສົມມາດແມ້ງ | ກະສັນຊ້ອຍຊື່ນພະໄມ ທ່ານເອີຍ! |
| ❈ ມວນໝູ່ທວນເທດຄ້າ | ຂາຍງ່າຍມີກຳໄລ |
| ເງິນຄຳຫຼາຍ | ຊື່ນມະໂນເລີງເລື້ອຍ |
| ກະສິກຳກໍໂດຍດ້າມ | ກຳມະກອນພ້ອມພໍ່າ |
| ລັດຖະການກໍຈິ່ງໄດ້ | ສູງຊັ້ນລື່ນກວ່າຫຼັງ |
| ❈ ກິດຕິຊັບກຽດກ້ອງ | ເຊັ່ງຊ່າລືຊາ |
| ເນົາຢູ່ໃນໂລກາ | ຢ່າທຸກຈົນເງິນໃຊ້ |
| ຮ່ວມໃຈກັນສັນສ້າງ | ເມືອງລາວໃຫ້ເຮືອງຮຸ່ງ |
| ທົ່ວທຸກຂົງເຂດບ້ານ | ປະຊາເຊື້ອຢູ່ເຢັນ ນັ້ນແລ້ວ! |
| ❈ ເວລາໝູນກາຍເປັນປີໃໝ່ແລ້ວ | ເສີມສິ່ງເປັນກຸສົນ |
| ຕັກເຕືອນຕົນເປັນຫຼັກ | ຢ່າເຄື່ອນຄອນແຄນລົ້ມ |
| ສ້າງສົມບຸນກຸສົນໄວ້ | ຈິດໃຈຂາວສະອາດ |
| ຈິ່ງສຳເລັດລາບລົ້ນ | ຜົນງານສ້າງລື່ນຫຼັງ ນັ້ນທ້ອນ! |



## ທັກທາຍ ລະບາຍ

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສາວຈົ້ມ**

❈ ***ປີໃໝ່***ລາວລາເລີກແລ້ວ ຈົບຈາກຈອນໄປ ບາງຄົນຍັງອາໄລ ເທດການອັນນັ້ນ ຍາມນັ່ງນອນຍັງຝັນເພີ້ ລະເມີບ່າຄວາມເກົ່າ ຄິດຮອດຄາວເມື່ອຄັ້ງ ສະຫຼອງ ຫລົ້ນມ່ວນມັນ ບາງຄົນນັ້ນ ຍັງຝັນອ່າຈັບໄມ ບາງຄົນຍັງອາໄລ ອາດີດຫວານແສນຊຶ້ງ ບາງຜ່ອງຊຶມລຶງເສົ້າ ຜິດຫວັງຫຼັງປີໃໝ່ ເປັນແນວໃດກະຊ່າງຫ້ອນ ຂໍໃຫ້ພົ້ນຜ່ານໄປ ສາເນີປີໃໝ່ໃຈຕັ້ງ ກະທ່ານແຕ່ຄວາມດີ ຫາກຊິມີຄົນເຫັນ ຄ່າຄຸນຄວາມດີສ້າງ ທຸກເສັ້ນທາງເດີນກ້າວ ເອົາຄວາມດີຄຽງຄູ່ບຸນຊິບໍ່ສົ່ງຍູ້ ສົມຫວັງໄດ້ດັ່ງມະໂນ ***ດອກບາ!***

❈ ***ກ່ອນ***ປີໃໝ່ລາວ ເຫັນຂ່າວກ່ຽວກັບ ໃບຂັບຂີ່ ໂດຍເຈົ້າໜ້າທີ່ບອກວ່າ ມັນແມ່ນສິ່ງຈຳເປັນ ທີ່ຜູ້ຂັບຂີ່ປະເພດລົດຈັກ ຕ້ອງມີເພາະຕອນນີ້ ບັນຫາເດັກມັດທະຍົມ ຫຼື ນັກຂັບຂີ່ໜ້າໃໝ່ຈຳນວນຫຼາຍ ບໍ່ມີໃບອະນຸຍາດຂັບຂີ່ຖືກຕ້ອງຕາມກົດໝາຍ ຮ້າຍແຮງກວ່ານັ້ນ ຄື ດື່ມສິງມຶນເມົາແລ້ວຂັບ ພ້ອມກັບລະເມີດກົດຈະລາຈອນ ພາໃຫ້ສັງຄົມເດືອດຮ້ອນ ເພາະນັ້ນ ເປັນສາເຫດຫຼັກ ພາໃຫ້ເກີດອຸບັດເຫດຕາມຖະໜົນ ເພີ່ນກໍເລີຍຊອກຄົ້ນ ການຫຼຸດຜ່ອນບັນຫາ ຈັດແຜນໂຄສະນາ ທົ່ວຊຸມຊົນໃຫ້ເຊື່ອມຊຶມເຂົ້າໃຈພ້ອມ ປະຕິບັດເຄັ່ງຄັດ ຈັດກຳລັງອຳນວຍຄວາມສະດວກໃຫ້ ນັກຂັບຂີ່ທຸກທ່ານໄດ້ ໄປ-ມາໃຫ້ປອດໄພ ***ຈົ່ມເຊີຍ!***

## ຊອບຍິ້ມ

**# ແອ່ນຕຸ້ງ**

**ເລື່ອງ: ແວ່ນຕາ**

ມື້ໜຶ່ງທ້າວ ກິບ້ອຍ ກັບຈາກໂຮງຮຽນ ພໍແຕ່ມາຮອດເຮືອນ ກໍແລ່ນຫາພໍ່ທັນທີ ທັງເວົ້າຂຶ້ນວ່າ:

**ທ້າວ ກິບ້ອຍ:** ແວ່ນຕາອີ່ພໍ່ ກະຂະຫຍາຍໄດ້ໝົດທຸກແນວເບາະ?

**ພໍ່:** ເອີ້ ກະໄດ້ທັ້ງນະ!

ທ້າວ ກິບ້ອຍ ຈັບໃບຄະແນນຍື່ນໃຫ້ພໍ່ ພ້ອມທັງເວົ້າຂຶ້ນວ່າ:

**ທ້າວ ກິບ້ອຍ:** ຄັນຊັ້ນ ກະໃສ່ເບິ່ງໃບຄະແນນໃຫ້ລູກແດ່ ຂະຫຍາຍຈາກ 2 ໃຫ້ເປັນ 10 ໂລດເດີອີ່ພໍ່, ມື້ອື່ນລູກຊິເອົາໄປອ້າງໝູ່ຢູ່ໂຮງຮຽນ

**ພໍ່:** ຮ້ວາຍ! ບັກອັນນີ້

## ຄະຕິເຕືອນໃຈ

**# ດອກຂະຍອມ**

ທຳຄວາມດີນັ້ນ ເໝືອນປຸກເຮືອນຫຼັງໃໝ່
ບາດວ່າທຳຊົ່ວຊ້າ ບໍ່ພໍ່ມື້ຊົ່ວຍາມ ແຫ້ນແລ້ວ




# ແດ່ – ແນ່

ຫວ່າງນີ້ ມີການທັກທ້ວງກັນທາງສື່ອອນລາຍກ່ຽວກັບການນຳໃຊ້ຄຳ 'ແດ່' ເປັນ 'ແນ່'. ສ່ວນຫຼາຍມັກໃຊ້ຄຳວ່າ 'ແດ່' ແຕ່ບາງຄົນຊ້ຳພັດອອກສຽງເປັນ 'ແນ່' ແທນ 'ແດ່' ຈຶ່ງມີຄົນຈຳນວນໜຶ່ງເວົ້າວ່າ "ການໃຊ້ຄຳວ່າ 'ແນ່' ນີ້ບໍ່ຖືກ, ຕ້ອງໃຊ້ຄຳວ່າ 'ແດ່' ຈຶ່ງຖືກ". ຕໍ່ກັບບັນຫານີ້ ລຸງຄຳໄດ້ໃຫ້ທັດສະນະດັ່ງນີ້:

ຄຳວ່າ 'ແດ່' ຖ້າໃຊ້ເປັນຄຳວິເສດ ກໍໝາຍເຖິງ "ກໍມີ, ເລັກນ້ອຍ ເຊິ່ງມັກໃຊ້ປະກອບຄຳອື່ນໃຫ້ຮູ້ວ່າອັນນັ້ນກໍມີ, ມີອັນນັ້ນ ມີອັນນີ້ນຳ" ເຊັ່ນ

- ອາຫານທີ່ພວກເຮົາຈະກິນມື້ນີ້ ມີເຍື່ອງນັ້ນແດ່, ເຍື່ອງນີ້ແດ່...
- ລືມກັນໄປກັນມາ ຊອດແຈ້ງເອົາຊື່ໆ ເພາະລືມເລື່ອງນີ້ແດ່ ເລື່ອງນັ້ນແດ່...
- ເສຍເວລາເກືອບໝົດມື້ ຍ້ອນໄປຢາມຜູ້ນີ້ແດ່, ຢາມຜູ້ນັ້ນແດ່...

ພ້ອມກັນນັ້ນ ຄຳວ່າ 'ແດ່' ຍັງສາມາດໃຊ້ເປັນຄຳລົງທ້າຍໃນເວລາເຮົາເວົ້າເປັນປະໂຫຍກບົ່ງການທີ່ມີລັກສະນະຂໍຮ້ອງ ເຊັ່ນ

- ຂ້ອຍຂໍໄປນຳແດ່!
- ຕື່ມໃຫ້ແດ່, ຈັກໜ້ອຍໜຶ່ງ!
- ກະລຸນາເວົ້າແຮງໆແດ່, ທາງຫຼັງບໍ່ໄດ້ຍິນ!

ຄຳວ່າ 'ແດ່' ໃນກໍລະນີເປັນຄຳວິເສດ ແລະ ຄຳລົງທ້າຍບາງເທື່ອກໍອອກສຽງເປັນ 'ແນ່' ເຊິ່ງມີຄວາມໝາຍອັນດຽວກັນຕ່າງແຕ່ການອອກສຽງ 'ດ' ເປັນ 'ນ'. ສ່ວນຫຼາຍຈະໃຊ້ 'ແນ່' ເວລາເວົ້າຢ່າງເປັນກັນເອງລະຫວ່າງໝູ່ເພື່ອນ ຫຼື ຄົນໃກ້ຊິດ ໂດຍສະເພາະແມ່ນເດັກນ້ອຍຫຼືໄວໜຸ່ມປາກົດເຫັນໃຊ້ຫຼາຍກວ່າຜູ້ໃຫຍ່.

# ຂໍ້ສັງເກດ: 'ແດ່' ເປັນຄຳມາດຕະຖານທີ່ມີບັນທຶກໄວ້ໃນວັດຈະນານຸກົມພາສາລາວທຸກສະບັບ, ສ່ວນ 'ແນ່' ເປັນຄຳໃຊ້ໃນພາສາປາກເວົ້າແບບກັນເອງທີ່ສຸດຄຽງຄູ່ກັບຄຳມາດຕະຖານ 'ແດ່'.

ທ່ານຜູ້ອ່ານເດ, ເຄີຍໃຊ້ຄຳວ່າ 'ແນ່' ແທນໃຫ້ 'ແດ່' ບໍ່?




# ວິໄສທັດເສດຖະກິດພາກພື້ນອາຊຽນ+3 ປີ 2023



ອີງຕາມການລາຍງານຂ່າວວັນທີ 6 ເມສາຜ່ານມາໃຫ້ຮູ້ວ່າ: ຫ້ອງການຄົ້ນຄວ້າເສດຖະກິດມະຫາພາກອາຊຽນ+3 ເຊິ່ງປະກອບມີ 10 ປະເທດອາຊຽນ ແລະ 3 ປະເທດ (ຈີນ, ຍີ່ປຸ່ນ, ສາທາລະນະລັດເກົາຫຼີ) ທີ່ມີສຳນັກງານໃຫຍ່ຕັ້ງຢູ່ສິງກະໂປ ໄດ້ປະກາດວິໄສທັດເສດຖະກິດພາກພື້ນອາຊຽນ ແລະ ຈີນ, ຍີ່ປຸ່ນ, ສ.ເກົາຫຼີ ປີ 2023 ໂດຍຄາດຄະເນວ່າ ເສດຖະກິດພາກພື້ນອາຊຽນ ແລະ ຈີນ, ຍີ່ປຸ່ນ, ສ.ເກົາຫຼີ ປີ 2023 ຈະເຕີບໂຕຢູ່ໃນລະດັບ 4,6%, ຂະນະທີ່ເສດຖະກິດຈີນ ປີ 2023 ຈະເຕີບໂຕ 5,5%.

ບົດລາຍງານສະບັບນີ້ເຫັນວ່າ: ຄຽງຄູ່ກັບເສດຖະກິດອາເມຣິກາ ແລະ ເຂດໃຊ້ເງິນເອີໂຣເຕີບໂຕຊ້າລົງ, ຄາດວ່າເສດຖະກິດທົ່ວໂລກຈະເຕີບໂຕຢ່າງຊ້າໃນປີ 2023. ເຖິງວ່າສະພາບແວດລ້ອມທົ່ວໂລກເຕັມໄປດ້ວຍສິ່ງທ້າທາຍ, ແຕ່ເສດຖະກິດຂອງພາກພື້ນອາຊຽນແລະຈີນ, ຍີ່ປຸ່ນ, ສ.ເກົາຫຼີ ຈະເຕີບໂຕໃນລະດັບ 4,6%, ສູງກວ່າການເຕີບໂຕລະດັບ 3,2% ໃນປີ 2022.

ການເຕີບໂຕດ້ານເສດຖະກິດຂອງພາກພື້ນດັ່ງກ່າວໄດ້ສູງຂຶ້ນ, ຕົ້ນຕໍແມ່ນຍ້ອນການຄາດຄະເນການຟື້ນຟູເສດຖະກິດຂອງຈີນ, ຍີ່ປຸ່ນ, ສ.ເກົາຫຼີ ໄດ້ສູງຂຶ້ນ, ຄາດວ່າ ການເຕີບໂຕຈະເພີ່ມຈາກ 2,6% ໃນປີ 2022 ຂຶ້ນເປັນ 4,5% ໃນປີ 2023. ສ່ວນການເຕີບໂຕດ້ານເສດຖະກິດຂອງພາກພື້ນອາຊຽນ, ຄາດວ່າຈະຫຼຸດລົງຈາກລະດັບ 5,6% ໃນປີ 2022 ຢູ່ໃນລະດັບ 4,9% ໃນປີ 2023.

# ທິດທາງລວມໃຫ້ແກ່ການຂະຫຍາຍການພົວພັນຈີນ-ຝຣັ່ງ

ມີການລາຍງານໃຫ້ຮູ້ວ່າ: ທ່ານ ເອັມມານູເອວ ມາຄຣົງ ປະທານາທິບໍດີຝຣັ່ງ ໄດ້ຢ້ຽມຢາມຈີນທາງລັດຖະກິດ ລະຫວ່າງວັນທີ 5-7 ເມສາ 2023 ໂດຍວາລະເມື່ອວັນທີ 6 ເມສານີ້, ທ່ານ ສີ ຈິ້ນ ຜິງ ປະທານປະເທດຈີນກັບທ່ານ ເອັມມານູເອວ ມາຄຣົງ ປະທານາທິບໍດີຝຣັ່ງ ໄດ້ພົບປະເຈລະຈາກັນ ເຊິ່ງໄດ້ຕົກລົງເປັນເອກະພາບກັນ ແລະ ເຫັນວ່າ: ຄວນຍຶດໝັ້ນເດີນຕາມທິດທາງລວມທີ່ໝັ້ນທ່ຽງ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ, ເປີດກວ້າງ ແລະ ຕັ້ງໜ້າ ແຫ່ງການພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານຈີນ-ຝຣັ່ງ ເພື່ອນຳເອົາບັນຍາກາດໃໝ່ໃຫ້ແກ່ການພົວພັນລະຫວ່າງຈີນກັບເອີຣົບ ແລະ ປະກອບສ່ວນໃໝ່ເຂົ້າໃນການຮັບມືກັບສິ່ງທ້າທາຍລັກສະນະທົ່ວໂລກໃຫ້ແກ່ປະຊາຄົມໂລກ. ພ້ອມນັ້ນ, ໃນວັນທີ 7 ເມສາ ສອງຝ່າຍຍັງໄດ້ອອກຖະແຫຼງການຮ່ວມຈີນ-ຝຣັ່ງອີກດ້ວຍ.

ໃນໂອກາດດັ່ງກ່າວ, ຜູ້ຊ່ຽວຊານບັນຫາສາກົນຫຼາຍທ່ານກ່າວວ່າ, ການພົບປະເຈລະຈາລະຫວ່າງປະມຸກລັດສອງປະເທດຈີນ-ຝຣັ່ງ ທີ່ຈັດຂຶ້ນຢູ່ນະຄອນຫຼວງປັກກິ່ງ ປະເທດຈີນ ໄດ້ຮັບໝາກຜົນອຸດົມສົມບູນ ແລະ ມີຄວາມໝາຍສຳຄັນຫຼາຍ, ຄວາມຮັບຮູ້ທີ່ເປັນເອກະສັນກັນ ອັນສຳຄັນຕ່າງໆຂອງການພົບປະເຈລະຈາຄັ້ງນີ້ ໄດ້ຊີ້ທິດທາງລວມໃຫ້ແກ່ການຂະຫຍາຍການພົວພັນສອງປະເທດ ເຊິ່ງໄດ້ສິ່ງສັນຍານອັນຕັ້ງໜ້າທີ່ສອງປະເທດຈະເພີ່ມທະວີການຮ່ວມມືໃນຂົງເຂດຕ່າງໆ ແລະ ຮ່ວມກັນຮັບມືກັບວິກິດການທົ່ວໂລກ ສູ່ພາຍນອກຢ່າງໃກ້ຊິດ.

# ອຢ ໄທ ເຕືອນ ກິນນ້ຳກ້ອນບໍ່ສະອາດ ລະວັງອາຫານເປັນພິດ ພົບເຫັນຈະຖືກປັບໃໝ



ສຳນັກຂ່າວຂອງປະເທດໄທ ແຫ່ງໜຶ່ງໄດ້ລາຍງານວ່າ: ວັນທີ 10 ເມສາ 2023 ທ່ານ ດຣ. ວິທິດ ສະລິດດີໄຊຍະກຸນ ຮອງເລຂາທິການຄະນະກຳມະການອາຫານ ແລະ ຢາ ກ່າວວ່າ: ຂໍໃຫ້ປະຊາຊົນລະມັດລະວັງໃນການບໍລິໂພກອາຫານ ແລະ ນ້ຳດື່ມ, ໃນຊ່ວງລະດູຮ້ອນປະຊາຊົນມີການບໍລິໂພກນ້ຳດື່ມ ແລະ ນ້ຳກ້ອນເປັນຈຳນວນຫລາຍ ໂອກາດທີ່ຈະມີສານປົນເປື້ອນຈາກເຊື້ອຈຸລິນຊີມີຫຼາຍຂຶ້ນ ໂດຍສະເພາະແມ່ນເຊື້ອອີໂຄໄລ, ແຊນໂມເນລາ ວິບຣິໂອ, ຄໍເລີເຣ່ ແລະອື່ນໆທີ່ເຮັດໃຫ້ມີອາການຖອກທ້ອງ ແລະ ອາຫານເປັນພິດໄດ້, ຜູ້ບໍລິໂພກຄວນເລືອກຊື້ນ້ຳດື່ມ ຫຼື ນ້ຳກ້ອນທີ່ບັນຈຸໃນພາຊະນະທີ່ສະອາດ, ເລກສານລະບົບອາຫານໃນເຄື່ອງໝາຍ ອຢ ຊື່ ແລະ ທີ່ຕັ້ງຂອງຜູ້ຜະລິດ, ນ້ຳໜັກ, ບໍລິມາດ, ວັນເດືອນປີ ຜະລິດ. ສຳລັບນ້ຳກ້ອນບົດ ຫຼື ນ້ຳກ້ອນຫຼອດ ຄວນສັງເກດລັກສະນະນ້ຳກ້ອນຕ້ອງໃສສະອາດ, ບໍ່ມີຄາບ, ບໍ່ມີສີ ຫຼື ກິ່ນຜິດປົກກະຕິ, ບໍ່ມີຝຸ່ນ ຫຼື ສິ່ງແປກປອມໃນນ້ຳກ້ອນ ຈຶ່ງສາມາດກິນໄດ້.

ທ່ານຍັງໄດ້ກ່າວຕື່ມອີກວ່າ: ຖ້າຫາກກວດພົບຜະລິດຕະພັນທີ່ມີການປົນເປື້ອນຈຸລິນຊີທີ່ເປັນອັນຕະລາຍຕໍ່ສຸຂະພາບ ຈະດຳເນີນການຕາມລະບຽບກົດໝາຍ ແລະ ຈະຖືກປັບໃໝ 50.000 ບາດ ຫຼື ປະມານ 25 ລ້ານກີບ ແລະ ຕິດຄຸກບໍ່ເກີນ 2 ປີ.

# ສາເຫດຕົ້ນຕໍເຮັດໃຫ້ຂະແໜງການທະນາຄານເອີຣົບ ເກີດຄວາມປັ່ນປ່ວນ

ເມື່ອບໍ່ດົນມານີ້ ໄດ້ມີການລາຍງານຂ່າວວ່າ ຂະແໜງການທະນາຄານເອີຣົບເກີດຄວາມປັ່ນປ່ວນ ໄດ້ກາຍເປັນຜົນກະທົບຂອງທົ່ວໂລກ, ທ່ານ ໄອອຽນ ເບກ ສາສະດາຈານສະຖາບັນຄົ້ນຄວ້າເອີຣົບ ວິທະຍາໄລເສດຖະກິດການເມືອງລອນດອນຂອງອັງກິດ ໃຫ້ສຳພາດຕໍ່ນັກຂ່າວວ່າ: ອາເມຣິກາ ແລະ ເອີຣົບຂຶ້ນອັດຕາດອກເບ້ຍຢ່າງຕໍ່ເນື່ອງໃນປີກວ່າທີ່ຜ່ານມາ ແມ່ນສາເຫດຕົ້ນຕໍທີ່ເຮັດໃຫ້ຂະແໜງການທະນາຄານເອີຣົບເກີດຄວາມປັ່ນປ່ວນ.

ທ່ານ ໄອອຽນ ເບກ ກ່າວຕື່ມວ່າ: ຖ້າອັດຕາດອກເບ້ຍສູງຂຶ້ນ, ລາຄາພັນທະບັດຈະຕົກຕ່ຳລົງ, ອາເມຣິກາ ແລະ ເອີຣົບຂຶ້ນອັດຕາດອກເບ້ຍຢ່າງຕໍ່ເນື່ອງ ເຮັດໃຫ້ທະນາຄານທີ່ມີພັນທະບັດກວມອັດຕາຂ້ອນຂ້າງສູງນັ້ນ ຕົກເຂົ້າໃນສະພາບຄວາມຫຍຸ້ງຍາກ. ຂະແໜງການທະນາຄານເອີຣົບເກີດຄວາມປັ່ນປ່ວນຄັ້ງນີ້, ເຮັດໃຫ້ທະນາຄານຂະໜາດໃຫຍ່ຕ່າງໆ ເຊັ່ນ: ທະນາຄານສິນເຊື່ອສະວິສ ແລະ ທະນາຄານດູດເຊີຂອງເຢຍລະມັນເປັນຕົ້ນ ລ້ວນແຕ່ໄດ້ຮັບຜົນກະທົບ.

ທ່ານ ໄອອຽນ ເບກ ຍັງກ່າວຕື່ມວ່າ: ປັດຈຸບັນ, ບັນຫາຂອງທະນາຄານເຫຼົ່ານີ້ ບໍ່ໄດ້ກະທົບກະເທືອນເຖິງທະນາຄານແຫ່ງອື່ນໆ ແລະ ຍັງບໍ່ທັນຂະຫຍາຍເປັນວິກິດການທະນາຄານ. ຖ້າອັດຕາດອກເບ້ຍສືບຕໍ່ເພີ່ມຂຶ້ນ, ອາດຈະເຮັດໃຫ້ຄວາມອ່ອນແອຂອງທະນາຄານປາກົດຕົວອອກມາຕື່ມອີກ.



## ເຝົ້າໄວ້ ໄດ້ບົດຮຽນ

ວິເສດ ສະແຫວງສຶກສາ

# ປ້ອງກັນບໍ່ໃຫ້ມະນຸດກາຍເປັນສິນຄ້າ

ອາຊະຍາກຳລະດັບໂລກທີ່ໄຮ້ພົມແດນ ແລະ ແຜ່ຫຼາຍເປັນໜ້າຢ້ານກົວທີ່ສຸດນັ້ນ ກໍຄື: ອາຊະຍາກຳຄ້າມະນຸດ, ຄ້າຢາເສບຕິດ ແລະ ອາຊະກຳຄ້າສັດປ່າ. ວ່າກັນວ່າອາຊະຍາກຳທັງສາມປະເພດນີ້ມີເງິນໝູນວຽນຫຼາຍພັນຕື້ໂດລາສະຫະລັດໃນແຕ່ລະປີ, ນອກນັ້ນ ຍັງເປັນກົກເຄົ້າເຫງົ້າກໍຂອງອາຊະຍາກຳອື່ນໆເຊັ່ນ ການຟອກເງິນ, ການສໍ້ລາດບັງຫຼວງອີກດ້ວຍ. ເພື່ອກັນໄວ້



ລ່ວງໜ້າບໍ່ໃຫ້ອາຊະຍາກຳເຫຼົ່ານັ້ນລະບາດ, ແຕ່ລະປະເທດຈຶ່ງຕ້ອງໄດ້ສ້າງ ແລະ ປະກາດໃຊ້ເຄື່ອງມືດ້ານກົດໝາຍເພື່ອເປັນດ່ານປ້ອງກັນທີ່ແໜ້ນໜາ. ສຳລັບບົດນີ້ ຂໍຍົກຕົວຢ່າງກ່ຽວກັບມາດຕະການຂອງປະເທດກຳປູເຈຍ ແລະ ຫວຽດນາມໃນການແກ້ໄຂບັນຫາການຄ້າມະນຸດ, ເພື່ອເບິ່ງໄວ້ເປັນບົດຮຽນ. ຢູ່ກຳປູເຈຍນັ້ນ ການຄ້າມະນຸດ ແລະ ການຂູດຮີດທາງເພດໄດ້ລວມຢູ່ໃນກົດໝາຍສະບັບດຽວກັນເອີ້ນວ່າ “ກົດໝາຍວ່າດ້ວຍການຄ້າມະນຸດ ແລະ ການຂູດຮີດທາງເພດ”. ເມື່ອປະມານເກືອບ 5 ປີຜ່ານມາ, ໄດ້ມີຂ່າວໃຫຍ່ດັງໄກອອກມາຈາກປະເທດກຳປູເຈຍ ກ່ຽວກັບຄະດີລະເມີດທາງເພດຕໍ່ເດັກຍິງອາຍຸຕໍ່າກວ່າ 5 ປີ ຈຳນວນ 3 ຄົນ. ຢູ່ກຳປູເຈຍ ບັນຫາລະເມີດທາງເພດນັ້ນ ຕິດພັນກັບການຄ້າມະນຸດຜ່ານເຄືອຂ່າຍການທ່ອງທ່ຽວເປັນສ່ວນໃຫຍ່. ການທ່ອງທ່ຽວທີ່ແອບແຝງເພື່ອຂາຍ ແລະ ຊື້ການບໍລິການທາງເພດນັ້ນ ເອີ້ນວ່າ ເຊັກທົວ (Sextour). ຄົນທີ່ໃຊ້ບໍລິການ Sextour ນີ້ມີຈຸດປະສົງເດີນທາງໄປຕ່າງປະເທດເພື່ອຊອກເສບສົມທາງເພດກັບຍິງ ຫຼື ຊາຍ ທີ່ເປັນຄົນທ້ອງຖິ່ນ ເພື່ອອັນທີ່ເອີ້ນວ່າ: “ລົດຊາດແປກໃໝ່” ໂດຍສະເພາະແມ່ນການຊອກມີເພດສຳພັນກັບເດັກນ້ອຍ. ບັນດານັກທ່ອງທ່ຽວ Sextour ນັ້ນບໍ່ສົນໃຈທ່ຽວຊົມທຳມະຊາດ, ບໍ່ສົນໃຈເລື່ອງປະຫວັດສາດ ຫຼື ວັດທະນະທຳຂອງບ້ານທີ່ໄປທ່ຽວ, ແຕ່ສົນໃຈ “Sex” ຢ່າງດຽວ. Sextour ນີ້ມີເຄືອຂ່າຍ ຢັ່ງຢາຍຢູ່ຕາມແຫຼ່ງທ່ອງທ່ຽວສຳຄັນ ແລະ ມີໄມ້ມືທີ່ເປັນພະນັກງານທ້ອງຖິ່ນ ໂດຍສະເພາະກໍແມ່ນກະໂຕຂອງຜູ້ນຳທ່ອງທັ້ນລະ. ຂ່າວຄະດີ Sextour ຢູ່ກຳປູເຈຍທີ່ມີທ້າວ ຣຸບ ເຈມ ຄະລິນ (Rugh James Cline) ຄົນສັນຊາດສະຫະລັດ ເປັນຈຳເລີຍຢູ່ກຳປູເຈຍນັ້ນ ເປັນພຽງ 1 ຕົວຢ່າງຂອງຄະດີການຄ້າມະນຸດທີ່ແອບແຝງມາໃນຮູບການທ່ອງທ່ຽວ. ທ້າວ ຣຸບ ເຈມ ຄະລິນ ຖືກຈັບໄດ້ຄາໜັງຄາເຂົາຖືກຕັດສິນຈຳຄຸກ 2 ປີເຄິ່ງ ແລະ ຕ້ອງໄດ້ເສຍເງິນຄ່າຊົດເຊີຍ ຫຼື ຄ່າທຳຂວັນໃຫ້ແກ່ເຫຍື່ອແຕ່ລະຄົນທີ່ເປັນເດັກຍິງອາຍຸຕໍ່າກວ່າ 5 ປີ ຜູ້ລະ 500 ໂດລາສະຫະລັດ. ຢູ່ກຳປູເຈຍໃນໄລຍະດຽວກັນນັ້ນ ກໍມີຮູບການຄ້າມະນຸດແບບໃໝ່ເກີດຂຶ້ນແຕ່ທາງການຂອງປະເທດນີ້ສາມາດເລີກຮື້ໄດ້ຢ່າງສຳເລັດນັ້ນ ກໍຄືຂະບວນການວ່າຈ້າງແມ່ຍິງກຳປູເຈຍໃຫ້ຖືພາມານແທນຄູ່ຜົວເມຍຕ່າງປະເທດມີລູກຍາກ ຫຼື ຂີ້ຄ້ານອູ້ມທ້ອງເປັນເວລາ 9 ເດືອນ. ຂ່າວບອກວ່າມີແມ່ຍິງກຳປູເຈຍທີ່ທຸກຍາກຫຼາຍສິບຄົນອາສາອູ້ມທ້ອງເພື່ອແລກກັບເງິນປະມານ 5 ພັນໂດລາສະຫະລັດ, ສ່ວນນາຍໜ້າວ່າຈ້າງທີ່ເປັນຄົນຕ່າງປະເທດນັ້ນ ໄດ້ກຳໄລມະຫາສານທີ່ເປັນຄ່າຕົວຂອງເດັກທີ່ເກີດມາແຕ່ລະຄົນ. ຢູ່ຫວຽດນາມຂະບວນການຄ້າມະນຸດຄັ້ງຮ້າຍແຮງ ແລະ ໂດ່ງດັງໄປທົ່ວໂລກນັ້ນເກີດຂຶ້ນໃນປີ 2019 ຄືມີຄົນຫວຽດນາມ ຈຳນວນ 39 ເສຍຊີວິດໃນທ້ອງລົດບັນທຸກທີ່ລັກລອບນຳພວກເຂົາຈາກປະເທດຝຣັ່ງເຂົ້າໄປອັງກິດ. ແຕ່ເນື່ອງຈາກວ່າພວກເຂົາຖືກຍັດເຊື່ອງໄວ້ທ້ອງລົດບັນທຸກທີ່ຂາດອາກາດ ດັ່ງນັ້ນ ຈຶ່ງເສຍຊີວິດກ່ອນຈະຖືກສົ່ງໃຫ້ເຖິງເປົ້າໝາຍ. ຄົນຫວຽດນາມ 39 ຄົນນີ້ ຖືກເຄືອຂ່າຍການຄ້າມະນຸດຢູ່ພາຍໃນຫວຽດນາມ. ຢູ່ຈີນຫຼອກຕົ້ມໃຫ້ໄປຊອກ “ງານດີ-ເງິນງາມ” ຢູ່ຕ່າງປະເທດຈົນສາມາດເດີນທາງຜ່ານຫຼາຍປະເທດແຕ່ກໍໄດ້ດັບຊີວິດລົງໃນທ້ອງລົດບັນທຸກ. ຫວຽດນາມປະກາດໃຊ້ກົດໝາຍວ່າດ້ວຍການຄ້າມະນຸດໃນປີ 2011. ນອກນັ້ນ ມີບົດບັນທຶກຮ່ວມກັບລາວ, ກຳປູເຈຍ, ຈີນ ແລະ ໄທ ເພື່ອຕ້ານການຄ້າມະນຸດ ແລະ ເປັນພາຄີສົນທິສັນຍາ ຕ້ານການຄ້າມະນຸດລະດັບພາກພື້ນ ແລະ ສາກົນອີກດ້ວຍ. ສະຖິຕິປີ 2015 ຊີ້ບອກວ່າໃນຫວຽດນາມມີຄະດີການຄ້າມະນຸດກວ່າ 400 ເລື່ອງ, ມີຜູ້ຕົກເປັນເຫຍື່ອປະມານ 1.000 ຄົນ ແລະ ມີຜູ້ພົວພັນກັບຄະດີປະມານ 7.000 ຄົນ ແຕ່ພໍມາຮອດປີ 2020 ຄະດີໄດ້ຫຼຸດລົງເປັນ 100 ກວ່າເລື່ອງ, ມີຜູ້ຕ້ອງຄະດີປະມານ 200 ຄົນ ແລະ ຜູ້ຕົກເປັນເຫຍື່ອປະມານ 200 ຄົນເຊັ່ນກັນ.




## ຂອບໃຈພະເຈົ້າ

*#ບ່າວກະບື*

ຄັ້ງໜຶ່ງ ຕອນຈານເລີ້ຍຍ່າງກາຍທາງມາ, ລາວສັງເກດເຫັນກອງຂີ້ກອງໜຶ່ງຢູ່ກາງທາງ. ລາວຫັນຫຼັງ, ກົ້ມລົງຫາກ້ອນຂີ້ ແລ້ວເອີ້ຍຂຶ້ນວ່າ: “ໂອຍ ! ເບິ່ງຄືກ້ອນຂີ້ບໍ່” ຈາກນັ້ນ, ລາວກົ້ມລົງຕື່ມອີກ. ຫຼັງຈາກດົມໆເບິ່ງ, ລາວເວົ້າວ່າ: ບະ... ກິ່ນມັນຄືຂີ້ແທ້ໆນີ້ລະ. ຈາກນັ້ນລາວຈັບເບິ່ງ ແລ້ວເອົານິ້ວມືມາແຍະໆໃສ່ປາກ ທັງເວົ້າຂຶ້ນວ່າ: “ບະ ເຮີຍ ລົດຊາດຂອງມັນກໍຄືກັບກັບຂີ້”

ສຸດທ້າຍລາວລຸກຂຶ້ນແລ້ວຍ່າງໜີ ທັງເວົ້າອອກມາວ່າ: “ຂອບໃຈພະເຈົ້າ ທີ່ຊ່ວຍບໍ່ໃຫ້ເຮົາຢຽບຂີ້ກ້ອນນີ້!”

## THANK GOD

*#BAOKBU*

Once, when Chan Leuy was passing by a road, he noliced some shit lying on it. He turned back and bent down to the piece of shit and said, “Oy! this looks like shit” Then he bent further down, After smelling it, he said “Baaa...! this really smells like shit” “Then he touched it and put his finger in his mouth he said” Ba this tastes also like shit

Finally, he got up and walked away saying, “THANK GOD I DID NOT STAMP ON IT!”

ກາຕູນ



ຫຼິ້ນປີໃໝ່ລາວດ້ວຍຄວາມສຸພາບ "ສະບາຍດີປີໃໝ່ລາວ"

● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນຳ :**
ທ່ານ ສີງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຄະນະບັນນາທິການ :**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ອັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄຳ ລໍຄຳສອນ ຮອງ ບກ

**ກອງບັນນາທິການ :**
ນາງ ກົງໃຈ ແສງອຳພັນ
ນາງ ສຸພາວັນ ຫອມສະນິດ
ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :**
ທ່ານ ຄຳຫວັນ ດາລາວົງ
ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ